ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ລ້ານຊ້າງ ປະກັນໄພ
Lane Xang Assurance

*ເລກທີ: 041 /QĐ-LAP-BTGD*
*ນະຄອນຫຼວງວຽງຈັນ, ລົງວັນທີ 26 ພະຈິກ 2021*

# ຂໍ້ຕົກລົງ

## ກ່ຽວກັບ: ປະກາດການນຳໃຊ້ເງື່ອນໄຂວ່າດ້ວຍການປະກັນໄພພາຫະນະ

**ຜູ້ອຳນວຍການໃຫຍ່**

**ບໍລິສັດ ລ້ານຊ້າງ ປະກັນໄພ ມະຫາຊົນ**

- ອີງຕາມ ກົດໝາຍວ່າດ້ວຍການປະກັນໄພ ສະບັບເລກທີ 78/ສພຊ, ລົງວັນທີ 29 ພະຈິກ 2019;
- ອີງຕາມ ໜັງສືແຈ້ງຕອບສະບັບເລກທີ 1536/ຄລປ, ລົງວັນທີ 18 ພະຈິກ 2021 ຂອງກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ, ກ່ຽວກັບ ການອະນຸມັດຜະລິດຕະພັນປະກັນໄພຂອງບໍລິສັດ;
- ອີງຕາມກົດລະບຽບການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ບໍລິສັດ ລ້ານຊ້າງ ປະກັນໄພ ມະຫາຊົນ ສະບັບລົງວັນທີ 3 ສິງຫາ 2013;
- ອີງຕາມການສະເໜີຂອງ ພະແນກຄຸ້ມຄອງວິຊາການ;

## ຕົກລົງເຫັນດີ

**ມາດຕາ 1:** ອະນຸມັດນຳໃຊ້ຮ່ວມກັບຂໍ້ຕົກລົງນີ້ "ເງື່ອນໄຂວ່າດ້ວຍການປະກັນໄພພາຫະນະ" (ສະບັບພາສາລາວ, ຫວຽດນາມ ແລະ ອັງກິດ).

**ມາດຕາ 2:** ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 0066/QĐ-LAP-BTGD ລົງວັນທີ 01 ເດືອນ 08 ປີ 2020;

**ມາດຕາ 3:** ພະແນກຄຸ້ມຄອງວິຊາການ, ບັນດາພະແນກອື່ນໆ ທີ່ຂຶ້ນກັບບໍລິສັດປະຕິບັດຕາມຂໍ້ຕົກລົງສະບັບນີ້.

***ບ່ອນຮັບ:***
- *ຕາມມາດຕາ 3;*
- *ຄະນະອຳນວຍການ;*
- *ເກັບມ້ຽນ: ພະແນກບຸກຄະລະກອນ-ບໍລິຫານ;*
  *ພະແນກຄຸ້ມຄອງວິຊາການ.*

**ເຊັນແທນຜູ້ອຳນວຍການໃຫຍ່**
**ຮອງຜູ້ອຳນວຍການໃຫຍ່**

ບໍລິສັດ ລ້ານຊ້າງ ປະກັນໄພ ມະຫາຊົນ
Lane Xang Assurance Public Company

**ນາຍ ແອັງ ເຢືອງ**

**LANEXANG ASSURANCE PUBLIC COMPANY (LAP)**
**Head Office:** 2nd Floor, MB Bank Building, Kaysone Phomvihane Road, Phonexay Village, Saysettha District, Vientiane Capital, Lao P.D.R
Email: **contact@lap.com.la** | Website: **www.lap.com.la**
Tel: **021 991 999** | Fax: **021 992 999** | Hotline: **1819**

# ເງື່ອນໄຂວ່າດ້ວຍການປະກັນໄພລົດ

**(ປະກາດໃຊ້ຮ່ວມກັບຂໍ້ຕົກລົງ ສະບັບເລກທີ: 041/QĐ-LAP-BTGD ລົງວັນທີ 26 ພະຈິກ 2021**

**ຂອງຜູ້ອຳນວຍການບໍລິສັດ ລ້ານຊ້າງ ປະກັນໄພ ມະຫາຊົນ)**

## ເງື່ອນໄຂທົ່ວໄປ

### ພາກທີ I: ບັນດາຂໍ້ກຳນົດທີ່ພົວພັນເຖິງ ມາດຕາການຄໍ້າປະກັນ.

**ຂໍ້ຕົກລົງຂອງສັນຍາ, ອານາເຂດຂອງການຄໍ້າປະກັນ ແລະ ຄຳນິຍາມທີ່ພົວພັນເຖິງ ຜູ້ໄດ້ຮັບການປະກັນໄພ ແລະ ຍານພາຫະນະທີ່ໄດ້ຮັບການປະກັນໄພ.**

ມາດຕາ 1: **ຂໍ້ຕົກລົງຂອງສັນຍາ:**

**1.1.** ບົນພື້ນຖານຜູ້ໄດ້ຮັບການປະກັນໄພທີ່ໄດ້ສະໝັກໃຈສະເໜີເຮັດປະກັນໄພນຳ ບໍລິສັດ ລ້ານຊ້າງ ປະກັນໄພ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ "ບໍລິສັດປະກັນໄພ") ທີ່ປະກັນໄພໃຫ້ຍານພາຫະນະຂອງຕົນຜ່ານໃບສະເໜີຂໍເຮັດປະກັນໄພ ແລະ ໃບສະໜອງຂໍ້ມູນ ທີ່ເປັນພື້ນຖານຂອງຂໍ້ຕົກລົງເຮັດສັນຍາສະບັບນີ້ ແລະ ຕ້ອງໄດ້ຊຳລະຄ່າທຳນຽມປະກັນໄພ ຕາມລະບຽບທີ່ໄດ້ລະບຸໄວ້ໃນໃບຢັ້ງຢືນປະກັນໄພ ຫຼື ສັນຍາປະກັນໄພ, ບໍລິສັດປະກັນໄພ ຈະໃຫ້ການຄຸ້ມກັນຕໍ່ກັບຄວາມເສຍຫາຍ, ການສູນເສຍ ຫຼື ຄວາມຮັບຜິດຊອບຕາມລະບຽບ ທີ່ໄດ້ລະບຸຢູ່ໃນໃບຢັ້ງຢືນປະກັນໄພຕາມຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາສະບັບນີ້.

**ຄວາມຮັບຜິດຊອບທາງແພ່ງຂອງເຈົ້າຂອງລົດ:**

ກ. ຄວາມຮັບຜິດຊອບທາງແພ່ງ ໃນການສັນຈອນຕາມທ້ອງຖະໜົນ;

ຂ. ຄວາມຮັບຜິດຊອບທາງແພ່ງ ນອກການສັນຈອນຕາມທ້ອງຖະໜົນ;

ຄວາມເສຍຫາຍຕໍ່ລົດທີ່ໄດ້ຮັບການປະກັນໄພ:

ຄ. ຄວາມເສຍຫາຍທຸກຢ່າງທີ່ບໍ່ຕັ້ງໃຈຈາກອຸປະຕິເຫດ;

ງ. ຄວາມເສຍຫາຍຈາກການຕໍາ;

ຈ. ແກ້ວແອ່ນແຕກ;

ສ. ໄຟໄໝ້;

ຊ. ການລັກ;

ຍ. ການປົກປ້ອງສິດ ແລະ ການຮຽກຮ້ອງສິນທົດແທນຄືນ;

ດ. ຜູ້ຂັບຂີ່ ແລະ ຜູ້ໂດຍສານ.

**1.2.** ຂອບເຂດຂອງການຄຸ້ມກັນຕາມສັນຍານີ້ ອາດຈະຂະຫຍາຍການຄໍ້າປະກັນ ຕໍ່ຄວາມສ່ຽງໄພອື່ນໆ ດ້ວຍວິທີການຄັດຕິດກັບເງື່ອນໄຂເພີ່ມເຕີມສະເພາະ, ຂໍ້ກໍານົດຂອງບັນດາເງື່ອນໄຂທີ່ກ່ຽວຂ້ອງກັບຂອບເຂດຂອງການຄໍ້າປະກັນ.

ມາດຕາ 2: ອານາເຂດຂອງການຄໍ້າປະກັນ:

**2.1** ຂໍ້ຕົກລົງຂອງສັນຍາສະບັບນີ້ ໃຫ້ການຄຸ້ມກັນຕໍ່ກັບການສູນເສຍ ຫຼື ຄວາມເສຍຫາຍທີ່ເກີດຂຶ້ນຢູ່ໃນຂອບເຂດດິນແດນຂອງ ສປປ ລາວ. ອານາເຂດຂອງການຄໍ້າປະກັນນີ້ສາມາດຂະຫຍາຍການຄໍ້າປະກັນໄປຍັງປະເທດໃກ້ຄຽງ ດ້ວຍການເສຍຄ່າທໍານຽມປະກັນໄພເພີ່ມເຕີມ ແຕ່ຕ້ອງລະບຸໄວ້ໃນໃບຢັ້ງຢືນປະກັນໄພ, ໂດຍພາຍໃຕ້ຂໍ້ກໍານົດ ແລະ ເງື່ອນໄຂຂອງສັນຍາ.

ມາດຕາ 3: ນິຍາມທີ່ພົວພັນເຖິງ ຜູ້ໄດ້ຮັບການປະກັນໄພ:

ຜູ້ຖືສັນຍາປະກັນໄພ:

**3.1.** ຄໍາສັບທີ່ວ່າ "ຜູ້ຖືສັນຍາປະກັນໄພ" ແມ່ນບຸກຄົນທີ່ມີລາຍຊື່ລະບຸໄວ້ໃນໃບຢັ້ງຢືນປະກັນໄພ ຫຼື ບຸກຄົນໃດທີ່ສາມາດປ່ຽນແທນໃຫ້, ຜູ້ຖືສັນຍາປະກັນໄພໂດຍຖືກຕ້ອງຕາມກົດໝາຍ ບົນພື້ນຖານການຕົກລົງເຫັນດີຂອງທັງສອງຝ່າຍ ຫຼື ການປ່ຽນແທນຍ້ອນ ຜູ້ຖືສັນຍາປະກັນໄພໄດ້ເສຍຊີວິດໄປແລ້ວ.

ຜູ້ໄດ້ຮັບການປະກັນໄພ:

**3.2.** ຄໍາສັບທີ່ວ່າ "ຜູ້ໄດ້ຮັບການປະກັນໄພ" ແມ່ນໝາຍເຖິງ:

- ຜູ້ຂັບລົດທີ່ໄດ້ຮັບການປະກັນໄພດ້ວຍຄວາມສະໝັກໃຈ;
- ຜູ້ຖືສັນຍາປະກັນໄພ (ຫຼື ຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍຂອງຜູ້ຖືສັນຍາປະກັນໄພ);
- ເຈົ້າຂອງລົດທີ່ໄດ້ຮັບການປະກັນໄພ; ແລະ
- ບັນດາຜູ້ໂດຍສານສ່ວນບຸກຄົນທີ່ເດີນທາງນຳກັນ ໃນຖານະເປັນຜູ້ໂດຍສານທີ່ບໍ່ໄດ້ເສຍເງິນຄ່າປີ້ລົດ (ລວມທັງພະນັກງານທີ່ໄດ້ຮັບເງິນເດືອນ ຫຼື ກຳມະກອນຂອງ ຜູ້ຖືສັນຍາປະກັນໄພ ຫຼື ເຈົ້າຂອງລົດທີ່ໄດ້ຮັບການປະກັນໄພ) ນັບຕັ້ງແຕ່ບຸກຄົນດັ່ງກ່າວ ຢູ່ເທິງລົດທີ່ລະບຸໃນໃບຢັ້ງຢືນປະກັນໄພ ຈົນມາເຖິງຈຸດໝາຍ ແລະ ລວມທັງເວລາພວກເຂົາລົງລົດ ລວມເຖິງເວລາຂັບລົດ ຫຼື ການສ້ອມແປງລົດໃນໄລຍະການເດີນທາງ ເຖິງແມ່ນວ່າເຂົາເຈົ້າບໍ່ໄດ້ຂີ່ລົດຄັນທີ່ລະບຸໄວ້ກໍ່ຕາມ; ແລະ
- ບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ຂັບຂີ່, ກໍ່ເປັນຜູ້ໄດ້ຮັບການປະກັນໄພໃນເວລາທີ່ເຂົາເຈົ້າຂີ່ລົດທ່ອງທ່ຽວຄັນອື່ນເປັນບາງຄັ້ງ ທີ່ບໍ່ແມ່ນລົດຂອງເຂົາເອງ, ເຖິງແມ່ນວ່າເຂົາເຈົ້າຈະເປັນຜູ້ຂັບລົດດັ່ງກ່າວນີ້ ຫຼື ບໍ່ກໍຕາມ.

**ບັນດາພັນທະທີ່ຈຳເປັນຕໍ່ກັບ ໃບຂັບຂີ່ຍານພາຫະນະ ແລະ ອາຍຸຂອງຜູ້ຂັບຂີ່ລົດ:**

**3.3.** ບຸກຄົນທີ່ກ່າວມາຂ້າງເທິງນີ້ ຈະມີສິດຮຽກຮ້ອງຕາມຂໍ້ກຳນົດຂອງສັນຍາປະກັນໄພນີ້ ໃນເງື່ອນໄຂເວລາເກີດອຸປະຕິເຫດ ກໍຕໍ່ເມື່ອວ່າ: ຜູ້ຂັບລົດ ມີເງື່ອນໄຂຄົບຖ້ວນໃນການຂັບຂີ່ລົດ ອີງຕາມລະບຽບ ແລະ ກົດໝາຍຂອງ ສປປ ລາວ ກ່ຽວກັບ ສິດໃນການຄອບຄອງ ແລະ ນຳໃຊ້ລົດ ເຊິ່ງລວມເຖິງ ກຳມະສິດນຳໃຊ້ໃບຂັບຂີ່ລົດທີ່ຖືກຕ້ອງ (ບໍ່ຖືກຍຸດຕິ ແລະ ບໍ່ໝົດອາຍຸການນຳໃຊ້) ແລະ ຜູ້ຂັບຂີ່ຕ້ອງແມ່ນຜູ້ນຳໃຊ້ຖືກຕ້ອງຕາມປະເພດລົດ ແລະ ມີອາຍຸຂັບຂີ່ທີ່ຖືກຕ້ອງຕາມກົດໝາຍ.

**3.4.** ຖ້າຫາກບໍ່ມີເງື່ອນໄຂຄົບຖ້ວນດັ່ງທີ່ໄດ້ກ່າວໃນຂ້າງເທິງນີ້, ບໍລິສັດປະກັນໄພ ຈະບໍ່ໃຫ້ການຄຸ້ມກັນລວມໄປເຖິງ ຜູ້ຂັບຂີ່ທີ່ກຳລັງຮຽນຂັບລົດ ຫຼື ໄດ້ຮັບການຊ່ວຍເຫຼືອຈາກບຸກຄົນອື່ນ ຊ່ວຍໃຫ້ມີໃບຂັບຂີ່ທີ່ຖືກຕ້ອງຕາມລະບຽບກໍຕາມ.

**3.5.** ເງື່ອນໄຂຍົກເວັ້ນນີ້ ຈະບໍ່ນຳໃຊ້ຕໍ່ກັບຜູ້ຂັບລົດທີ່ມີໃບຂັບຂີ່ຍານພາຫະນະທີ່ໝົດອາຍຸການນຳໃຊ້, ດ້ວຍເງື່ອນໄຂຕ້ອງແຈ້ງຕໍ່ ບໍລິສັດປະກັນໄພ ໃນເວລາເຮັດສັນຍາປະກັນໄພ ຫຼື ຕໍ່ສັນຍາປະກັນໄພ, ຍ້ອນມີຄວາມຫຍຸ້ງຍາກຕໍ່ກັບ ສະຖານທີ່ ຫຼື ເວລາມາອາໄສຢູ່ຊົ່ວຄາວ ຍັງບໍ່ທັນຕໍ່ອາຍຸໃບຂັບຂີ່ພາຫະນະ.

**ອຸປະຕິເຫດ:**

**3.6** ຄຳສັບທີ່ວ່າ "ອຸປະຕິເຫດ" ໝາຍເຖິງ ເຫດການທີ່ກະທັນຫັນບໍ່ສາມາດກຳນົດກ່ອນລ່ວງໜ້າ, ເປັນເຫດການບັງເອີນ, ບໍ່ເຈດຕະນາ, ບໍ່ກ່ຽວຂ້ອງໃດໆກັບ ຜູ້ໄດ້ຮັບການປະກັນໄພ ແລະ ພົວພັນເຖິງລົດທີ່ໄດ້ຮັບການປະກັນໄພ.

**ບຸກຄົນທີ່ໄດ້ຮັບພິຈາລະນາການຄ້ຳປະກັນ:**

**3.7.** ບຸກຄົນທີ່ໄດ້ລະບຸດັ່ງລຸ່ມນີ້ ຖ້າບໍ່ລະເມີດໃນພັນທະທີ່ຈຳເປັນຕໍ່ກັບ ໃບຂັບຂີ່ຍານພາຫະນະ ແລະ ອາຍຸຂອງຜູ້ຂັບຂີ່ລົດ (ໃນຂໍ້ 3.3 ແລະ ຂໍ້ 3.4) ແມ່ນມີສິດຮຽກຮ້ອງຕາມຂໍ້ກຳນົດຂອງສັນຍາປະກັນໄພສະບັບນີ້.

**(ກ) ສຳລັບມາດຕາການຄ້ຳປະກັນຂໍ້ ກ ເຖິງ ຂໍ້ ຂ:**

ຜູ້ຖືສັນຍາປະກັນໄພ, ເຈົ້າຂອງຜູ້ຖືກຳມະສິດລົດທີ່ໄດ້ຮັບການປະກັນໄພ ແລະ ບຸກຄົນອື່ນທີ່ໄດ້ຮັບອະນຸຍາດຈາກ ຜູ້ຖືສັນຍາປະກັນໄພ ຫຼື ເຈົ້າຂອງຜູ້ຖືກຳມະສິດລົດທີ່ໄດ້ຮັບການປະກັນໄພມອບສິດໃຫ້ຮັບຜິດຊອບໃນການປົກປ້ອງ ແລະ ຂັບຂີ່ລົດ (ສ່ວນບຸກຄົນທີ່ເຝົ້າຍາມຢູ່ອູ່ສ້ອມແປງລົດ, ບຸກຄົນທີ່ມີອາຊີບເປັນ ນາຍໜ້າ, ຜູ້ຊື້ຂາຍ, ວຽກງານສ້ອມແປງ ຫຼື ກວດກາສະພາບເຕັກນິກລົດ ລວມເຖິງຜູ້ຄຸມງານຂອງເຂົາເຈົ້າ ແມ່ນບໍ່ຖືວ່າເປັນຜູ້ຖືກມອບສິດ, ເຖິງແມ່ນວ່າ ລົດໄດ້ມອບໃຫ້ພວກເຂົາ ເພື່ອຈຸດປະສົງເຮັດວຽກໃດກໍ່ຕາມ).

**(ຂ) ສຳລັບມາດຕາການຄ້ຳປະກັນຂໍ້ ກ:**

ບັນດາຜູ້ໂດຍສານໄປນຳລົດທີ່ໄດ້ຮັບການປະກັນໄພ (ຍົກເວັ້ນຜູ້ໂດຍສານທີ່ບໍ່ໄດ້ເສຍຄ່າປີ້ລົດ - ດັ່ງທີ່ໄດ້ລະບຸໄວ້ຂໍ້ (ງ) ລຸ່ມນີ້).

**(ຄ) ສຳລັບມາດຕາການຄ້ຳປະກັນຂໍ້ ຍ:**

ພົວພັນເຖິງກ່ຽວກັບການດຳເນີນຄະດີທາງກົດໝາຍ, ບຸກຄົນທີ່ກ່າວມາຂ້າງເທິງຕາມເງື່ອນໄຂໃນການຄ້ຳປະກັນແຕ່ຂໍ້ ກ ເຖິງ ຂໍ້ ຊ.

ກ່ຽວກັບການຮຽກຮ້ອງສິນທົດແທນຄືນ, ບຸກຄົນ ຫຼືວ່າ ຜູ້ໂດຍສານຢູ່ເທິງລົດທີ່ໄດ້ຮັບການປະກັນໄພ, ຕ້ອງເປັນຜູ້ໂດຍສານທີ່ບໍ່ໄດ້ເສຍຄ່າປີ້ລົດ.

**(ງ) ສຳລັບມາດຕາການຄ້ຳປະກັນຂໍ້ ດ:**

ຜູ້ໂດຍສານທີ່ບໍ່ໄດ້ເສຍຄ່າປີ້ລົດ ໝາຍເຖິງ ຜູ້ໂດຍສານໃດໜຶ່ງທີ່ໄດ້ຖືກຂົນສົ່ງໂດຍບໍ່ໄດ້ເສຍຄ່າຈ້າງໃຫ້ຜູ້ຂັບລົດ, ລວມທັງກໍລະນີເຂົາເຈົ້າສະໝັກໃຈປະກອບສ່ວນສົມທົບຄ່າໃຊ້ຈ່າຍສິ້ນເປືອງໃນການເດີນທາງ ເຖິງແມ່ນວ່າບໍ່ຕ້ອງຊຳລະຕາມຄວາມເປັນຈິງກໍ່ຕາມ.

**ມາດຕາ 4: ນິຍາມທີ່ພົວພັນເຖິງ ຍານພາຫະນະ:**

**ຍານພາຫະນະທີ່ສາມາດເຮັດການປະກັນໄພ:**

**4.1.** "ຍານພາຫະນະທີ່ສາມາດເຮັດການປະກັນໄພ" ໝາຍເຖິງ:

- ຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກ ຢູ່ທາງບົກ, ຫຼື
- ຍານພາຫະນະໃດ (ລົດພ່ວງ ແລະ ເຄິ່ງລົດພ່ວງ) ທີ່ໄດ້ອອກແບບມາ ເພື່ອເກາະຕິດກັບລົດທີ່ແລ່ນດ້ວຍເຄື່ອງຈັກທາງບົກ ເຊິ່ງແມ່ໃສ່ຮັບໃຊ້ການຂົນສົ່ງໂດຍສານຄົນ ຫຼື ວັດຖຸເຊິ່ງໄດ້ລະບຸໄວ້ໃນໃບຢັ້ງຢືນປະກັນໄພ ລວມມີ: ບັນດາອຸປະກອນເສີມ ແລະ ອຸປະກອນເສີມຕ່າງໆມາດຕະຖານຂອງໂຮງງານຜູ້ຜະລິດເຊິ່ງ ຜູ້ຖືສັນຍາປະກັນໄພ ຕ້ອງແຈ້ງໃຫ້ບໍລິສັດປະກັນໄພ ຮັບຊາບ ແລະ ບໍລິສັດປະກັນໄພໄດ້ຕົກລົງໃຫ້ການຄຸ້ມກັນເປັນລາຍລັກອັກສອນ; ແລະ
- ເຄື່ອງກົນຈັກທີ່ແລ່ນເທິງໜ້າດິນ (ເປັນຕົ້ນ ບັນດາອຸປະກອນເຄື່ອງມືການກະເສດ ຫຼື ເຄື່ອງກົນຈັກກໍ່ສ້າງ), ເມື່ອເປົ້າໝາຍການນໍາໃຊ້ເຄື່ອງກົນຈັກດັ່ງກ່າວໄດ້ລະບຸໃນໃບຢັ້ງຢືນປະກັນໄພ.

**ຍານພາຫະນະທີ່ມີການປະກັນໄພ ທີ່ບໍ່ສາມາດນໍາໃຊ້ໄດ້:**

**4.2** ຖ້າລົດທີ່ໄດ້ຮັບການປະກັນໄພ ຫາກບໍ່ສາມາດນໍາໃຊ້ໄດ້ໃນເວລາຂອງການປະກັນໄພ ບໍ່ວ່າໃນກໍລະນີໃດກໍຕາມ, ແມ່ນສັນຍາອາດຈະໂອນການຄໍ້າປະກັນໄປໃຫ້ຍານພາຫະນະຄັນອື່ນແທນ, ເຊິ່ງອາດເປັນລົດໃຫ້ເຊົ່າ ຫຼື ລົດຢືມມາໂດຍ ຜູ້ຖືສັນຍາປະກັນໄພ ຫຼື ເຈົ້າຂອງລົດ, ຂອບເຂດຂອງການຄໍ້າປະກັນ ເມື່ອມີການໂອນຄໍ້າປະກັນໄປລົດຄັນອື່ນ, ຈະຕ້ອງປະຕິບັດໄປຕາມເງື່ອນໄຂດັ່ງຕໍ່ໄປນີ້:

**4.3** ສໍາລັບການຄໍ້າປະກັນຂໍ້ ກ. ຂໍ້ ຂ ແລະ ຂໍ້ ຍ:

ຜົນສັກສິດຂອງສັນຍາຈະ ນັບແຕ່ມື້ບໍລິສັດປະກັນໄພໄດ້ຮັບເອກະສານ (ໄດ້ຮັບການຢັ້ງຢືນໂດຍມີສະແຕມໄປສະນີຄັດຕິດ) ທີ່ແຈ້ງການເຖິງ ການໂອນການຄໍ້າປະກັນຄືນ, ໂດຍເງື່ອນໄຂທີ່ວ່າ ຜູ້ຖືສັນຍາປະກັນໄພ ໄດ້ຊໍາລະຄ່າທໍານຽມປະກັນໄພເພີ່ມເຕີມນີ້, ຖ້ານໍາໃຊ້ ແມ່ນຄິດໄລ່ບົນພື້ນຖານອັດຕາສ່ວນຄ່າທໍານຽມທີ່ມີຜົນບັງຄັບໃຊ້ໃນຂະນະທີ່ມີການໂອນລົດຄືນ. ດ້ວຍຈຸດປະສົງນີ້, ໃນເອກະສານຕ້ອງລະບຸແຈ້ງ ເຖິງຄວາມແຕກຕ່າງລະຫວ່າງ ຍານພາຫະນະທີ່ນໍາມາປ່ຽນແທນ ແລະ ຍານພາຫະນະທີ່ກໍາລັງໄດ້ຮັບການປະກັນໄພ ຕາມບັນດາເງື່ອນໄຂໃນຂໍ້ 14.2(i), ພ້ອມກັນນັ້ນຕ້ອງປະຕິບັດຕາມມາດຕະການຕໍ່ຜູ້ກະທໍາຜິດທີ່ລະບຸໄວ້ໃນຂໍ້ 14.5.

**4.4** ສໍາລັບເງື່ອນໄຂການປະກັນໄພ ແຕ່ຂໍ້ ຄ ຫາ ຂໍ້ ຊ:

ການປະກັນໄພໃນຂໍ້ນີ້ ຈະຖືກຍອມຮັບ ເມື່ອໄດ້ຮັບການຕົກລົງເຫັນດີເປັນເອກະສານລາຍລັກອັກສອນຈາກ ບໍລິສັດປະກັນໄພ ຢັ້ງຢືນການໂອນມອບສິດການໂອນປະກັນໄພເທົ່ານັ້ນ.

ນອກຈາກນັ້ນ, ຜູ້ໄດ້ຮັບການປະກັນໄພ ອາດຈະຮຽກຮ້ອງຂໍໃຫ້ໂຈະການຄຸ້ມກັນໃນໄລຍະເວລາທີ່ລົດໄດ້ຮັບປະກັນໄພບໍ່ສາມາດນໍາໃຊ້ໄດ້, ແລະ ບໍລິສັດປະກັນໄພຕ້ອງຊົດໄຊ້ຄ່າປະກັນໄພຄືນຕາມອັດຕາສ່ວນໃຫ້ກັບ ໄລຍະເວລາທີ່ຍັງເຫຼືອໂດຍຄິດໄລ່ຕາມອັດຕາສ່ວນສໍາລັບ ສັນຍາປະກັນໄພ ນັບຕັ້ງແຕ່ເວລາຢຸດລະງັບການນໍາໃຊ້.

## ພາກທີ II: ການອະທິບາຍກ່ຽວກັບ ເງື່ອນໄຂການປະກັນໄພ

**ມາດຕາ 5: ເງື່ອນໄຂປະກັນໄພ ຂໍ້ "ກ": ການປະກັນໄພຄວາມຮັບຜິດຊອບທາງແພ່ງໃນການສັນຈອນທາງບົກ:**

**1)** ຂອບເຂດຂອງການຄໍ້າປະກັນ:

**5.1** ສັນຍາປະກັນໄພນີ້ນໍາໃຊ້ຕໍ່ເມື່ອ:

- ຕາມຫຼັກການທົດແທນຄວາມຮັບຜິດຊອບ ໃນກໍລະນີ ບໍ່ຖືຄວາມຜິດ ຕໍ່ກັບການບາດເຈັບທາງດ້ານຮ່າງກາຍທີ່ເກີດຂື້ນຕໍ່ບຸກຄົນທີ່ສາມ, ທີ່ເປັນຜູ້ຖືກເຄາະຮ້າຍ ໃນອຸປະຕິເຫດການສັນຈອນທາງບົກທີ່ພົວພັນເຖິງຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກ. ຂອບເຂດຄວາມຮັບຜິດຊອບທາງແພ່ງ ໃນກໍລະນີບໍ່ຖືຄວາມຜິດນີ້ ໄດ້ກໍານົດໄວ້ໃນເອກະສານຊ້ອນທ້າຍ 01 ທີ່ຄັດຕິດມາພ້ອມນີ້;

ຫຼັກການກ່ຽວກັບຄວາມຮັບຜິດຊອບ ໃນກໍລະນີບໍ່ຖືຄວາມຜິດ ບໍ່ສາມາດເປີດກ້ວາງການຄຸ້ມກັນເກີນທາງເລືອກແບບບັງຄັບທີ່ໄດ້ກໍານົດໄວ້.

**5.2** ປະກັນໄພນີ້ ນໍາໃຊ້ຕໍ່ກັບຜົນເສຍຫາຍທາງດ້ານການເງິນ ເຊິ່ງແມ່ນຄວາມຮັບຜິດຊອບ ທີ່ຜູ້ໄດ້ຮັບການປະກັນໄພ ອາດຕ້ອງໄດ້ຮັບຜິດຊອບຍ້ອນ ການບາດເຈັບທາງດ້ານຮ່າງກາຍ ແລະ/ຫຼື ເສຍຫາຍທາງດ້ານວັດຖຸໃຫ້ແກ່ບຸກຄົນທີ່ສາມ ໃນກໍລະນີລົດທີ່ໄດ້ຮັບການປະກັນໄພກໍາລັງສັນຈອນ ທີ່ປະສົບເຫດການເນື່ອງຈາກ:

**i.** ອຸປະຕິເຫດ, ໄຟໄໝ້ ຫຼື ການລະເບີດທີ່ເກີດຈາກ ລົດທີ່ໄດ້ຮັບການປະກັນໄພ, ເຄື່ອງອຸປະກອນ ແລະ ຜະລິດຕະພັນນໍາໃຊ້ໃຫ້ແກ່ການເຄື່ອນໄຫວຂອງລົດ, ວັດຖຸ ແລະ ຊັບສິນໃນ ຫຼື ເທິງລົດທີ່ໄດ້ຮັບການຄຸ້ມກັນ;

ii. ສູນເສຍ ຫຼື ເປ່ເພຂອງອຸປະກອນອາໄຫລ່, ວັດຖຸ, ຊັບສິນ ຫຼື ຜະລິດຕະພັນໃນລົດດັ່ງກ່າວ; ຫຼື

iii. ອຸປະຕິເຫດທີ່ເກີດໃນຂະນະລົດທີ່ໄດ້ຮັບການປະກັນໄພ ລາກແກ່ລົດອື່ນ ຫຼື ຖືກລາກແກ່ໂດຍລົດຄັນອື່ນ; ແນວໃດກໍ່ຕາມ ຄວາມເສຍຫາຍທີ່ເກີດກັບລົດເຫຼົ່ານີ້ແມ່ນ ບໍ່ໄດ້ຮັບການຄຸ້ມກັນ.

5.3 ນອກຈາກການຄຸ້ມກັນຄວາມຮັບຜິດຊອບໃຫ້ບຸກຄົນທີ່ສາມ, ບໍລິສັດປະກັນໄພ ຍັງຕ້ອງທົດແທນໃຫ້ ຜູ້ໄດ້ຮັບການປະກັນໄພ ບັນດາຄ່າໃຊ້ຈ່າຍຕາມຕົວຈິງ ເພື່ອອະນາໄມ ຫຼື ປົວແປງ ເຄື່ອງພາຍໃນລົດທີ່ໄດ້ຮັບການປະກັນໄພ, ເຄື່ອງນຸ່ງຫົ່ມຂອງ ຜູ້ໄດ້ຮັບການປະກັນໄພ ແລະ ຜູ້ຕິດຕາມໄປນຳຜູ້ໄດ້ຮັບການປະກັນໄພ ເມື່ອການນຳໃຊ້ລົດທີ່ໄດ້ຮັບການປະກັນໄພຖືກນຳໃຊ້ດ້ວຍຄວາມເຕັມໃຈ ເພື່ອນຳສົ່ງຄົນເຈັບທີ່ເກີດອຸປະຕິເຫດ ໃນການສັນຈອນທາງບົກຂອງລົດທີ່ໄດ້ຮັບການປະກັນໄພ ໄປທຳການປິ່ນປົວ. ຄ່າໃຊ້ຈ່າຍນີ້ຈະໄດ້ທົດແທນຄືນ ໂດຍບໍ່ຈຳເປັນພິຈາລະນາດ້ານຄວາມຮັບຜິດຊອບ.

**2) ຂໍ້ຍົກເວັ້ນ:**

ຄວາມເສຍຫາຍ ແລະ ການສູນເສຍລຸ່ມນີ້ ຈະບໍ່ໄດ້ຮັບການຄຸ້ມກັນ:

5.4 ຄວາມເສຍຫາຍທີ່ເກີດຂຶ້ນຕໍ່ກັບ ຜູ້ຂັບລົດ ແລະ ຜູ້ໂດຍສານໃດກໍ່ຕາມທີ່ບໍ່ໄດ້ເສຍຄ່າປີ້ລົດ (ເຊິ່ງຕ້ອງໄດ້ຮັບການຄຸ້ມກັນຕາມຂໍ້ "ຜູ້ຂັບລົດ ແລະ ຜູ້ໂດຍສານ").

5.5 ການສູນເສຍທີ່ເກີດຈາກ ຜູ້ຂັບຂີ່ຍານພາຫະນະ ໃນກໍລະນີຢູ່ໃນສະພາບທີ່ນຳໃຊ້ແອລກໍຮອລ / ເຫຼົ້າ /ເບຍ ຫຼື ສານກະຕຸ້ນ.

5.6 ການສູນເສຍທີ່ເກີດຈາກ ລົດຂົນສົ່ງວັດຖຸໄວໄຟ, ວັດຖຸລະເບີດ, ວັດຖຸເຊື່ອມສະພາບງ່າຍ ຫຼື ນ້ຳມັນເຊື້ອໄຟ ເຊິ່ງວັດຖຸເຫຼົ່ານີ້ຈະເຮັດໃຫ້ຄວາມເສຍຫາຍມີລະດັບອັນຕະລາຍເພີ່ມຂຶ້ນ. ແນວໃດກໍ່ຕາມຂໍ້ຍົກເວັ້ນນີ້ ຈະບໍ່ນຳໃຊ້ເຂົ້າໃນການຂົນສົ່ງນ້ຳມັນເຊື້ອໄຟ ຫຼື ອາຍແກັດ ຖ້ານ້ຳໜັກບໍ່ເກີນ 500 kg ຫຼື 600 ລິດ (ເຊິ່ງລວມທັງນ້ຳມັນໃນຖັງ ຫຼື ອາຍແກັດ ທີ່ຈຳເປັນສຳລັບລົດຂົນສົ່ງ) ຫຼື ມີການຕົກລົງອື່ນ.

5.7 ການສູນເສຍທີ່ເກີດຂຶ້ນໃນການແຂ່ງຂັນລົດດ້ວຍຄວາມໄວ ຫຼື ການແຂ່ງຂັນກິລາອື່ນໆ (ຫຼືການທົດລອງແຂ່ງຂັນ) ເຖິງແມ່ນວ່າ ຈະໄດ້ຮັບອະນຸຍາດລ່ວງໜ້າ ຈາກອຳນາດການປົກຄອງ ຕາມກົດໝາຍທີ່ໄດ້ນຳໃຊ້ໃນປະຈຸບັນ ແລະ ຜູ້ໄດ້ຮັບການປະກັນໄພເຂົ້າຮ່ວມການແຂ່ງຂັນດັ່ງກ່າວໃນຖານະຜູ້ເຂົ້າຮ່ວມການແຂ່ງຂັນ, ຜູ້ຈັດຕັ້ງປະຕິບັດ ຫຼື ຜູ້ຕາງໜ້າໃຫ້ຜູ້ໃດຜູ້ໜຶ່ງຂອງພວກເຂົາ.

ຜູ້ໄດ້ຮັບການປະກັນໄພ ຕ້ອງຮັບຜິດຊອບໂດຍກົງຕໍ່ກົດໝາຍ ຕໍ່ກັບຄວາມສ່ຽງທີ່ໄດ້ລະບຸໃນມາດຕານີ້ ຖ້າບໍ່ໄດ້ຮັບອະນຸຍາດຈາກ ບໍລິສັດປະກັນໄພກ່ອນ. ຖ້າມີຄວາມຕ້ອງການ ຜູ້ໄດ້ຮັບການປະກັນໄພ ອາດຈະຮ້ອງຂໍນຳບໍລິສັດປະກັນໄພ ຂະຫຍາຍຂອບເຂດຂອງຄຸ້ມກັນໃຫ້ແກ່ຄວາມສ່ຽງພິເສດນີ້, ດ້ວຍເງື່ອນໄຂຕ້ອງໄດ້ຮັບການຮັບຮອງຈາກ ບໍລິສັດປະກັນໄພດ້ວຍເອກະສານເປັນລາຍລັກອັກສອນ.

5.8 ການສູນເສຍທີ່ເກີດຂຶ້ນຕໍ່ຊັບສິນ, ສິ່ງຂອງ ຫຼື ສັດທີ່ເຊົ່າມາ ຫຼື ມອບໃຫ້ຜູ້ຂັບລົດຮັບຜິດຊອບ ບໍ່ວ່າໃນຖານະໃດກໍ່ຕາມ; ເຖິງຢ່າງໃດກໍ່ຕາມ, ຂໍ້ຍົກເວັ້ນນີ້ຈະບໍ່ນຳໃຊ້ໃຫ້ ກັບຜົນເສຍຫາຍທາງການເງິນເຊິ່ງ ຜູ້ໄດ້ຮັບການປະກັນໄພ ອາດຈະຕ້ອງໄດ້ຮັບຜິດຊອບ, ໃນກໍລະນີມີການສູນເສຍເກີດຂຶ້ນຈາກໄຟໄໝ້ ຫຼື ການລະເບີດສະຖານທີ່ ທີ່ລົດໄດ້ຮັບການປະກັນໄພ ຈອດຢູ່.

5.9 ການສູນເສຍທີ່ເກີດຂຶ້ນຕໍ່ສິນຄ້າ ແລະ ສິ່ງຂອງທີ່ຖືກບັນທຸກດ້ວຍລົດທີ່ໄດ້ຮັບການປະກັນໄພ.

5.10 ການສູນເສຍທີ່ເກີດຂຶ້ນ ຫຼື ຮ້າຍແຮງຂຶ້ນຍ້ອນໄຟໄໝ້ ຫຼື ວັດຖຸລະເບີດທີ່ເປັນໂຄງສ້າງນິວເຄຼຍ ຫຼື ວັດຖຸດິບນິວເຄຼຍ ຫຼື ສິ່ງເສດເຫຼືອຂອງກຳມັນຕະພາບລັງສີ ຫຼື ແຫຼ່ງອື່ນໆຂອງລັງສີ ionizing ເຊິ່ງພາຍໃຕ້ຄວາມຮັບຜິດຊອບຂອງຜູ້ໃຊ້ອຸປະກອນນິວເຄຼຍນັ້ນ.

5.11 ການສູນເສຍທີ່ເລີ່ມຕົ້ນຈາກ ຫຼື ໂດຍຜ່ານ ຫຼື ຜົນເສຍຫາຍໂດຍກົງ ຫຼື ທາງອ້ອມຈາກສົງຄາມ, ການຮຸກຮານ ຫຼື ການກະທຳຂອງສັດຕູຕ່າງປະເທດ, ສັດຕູ ຫຼື ສົງຄາມກາງເມືອງ (ເຖິງຈະປະກາດເປີດສົງຄາມ ຫຼື ບໍ່ກໍ່ຕາມ), ຂະບວນລຸກຮື້ຂຶ້ນຂອງມະຫາຊົນທຸກຂະໜາດ ຫຼື ພັດທະນາກາຍເປັນການປະທ້ວງຂອງມະຫາຊົນ, ການລັດຖະປະຫານການທະຫານ, ການກະບົດ, ການປະຕິວັດ, ກຳລັງທະຫານບຸກໂຈມຕີ ຫຼື ທຸກການກະທຳໃດກໍ່ຕາມ, ບຸກຄົນໃດທີ່ຕາງໜ້າໃຫ້ອົງການຈັດຕັ້ງໃດທີ່ມີຈຸດປະສົງປະກອບມີການໂຄ່ນລົ້ມ ຫຼື ສິ່ງຜົນສະທ້ອນເຖິງລັດຖະບານໃນຄວາມເປັນຈິງ ຫຼື ຕາມກົດໝາຍໂດຍການກໍ່ການຮ້າຍ ຫຼື ວິທີການຮຸນແຮງອື່ນໃດ.

5.12 ການສູນເສຍທີ່ເກີດຂຶ້ນຍ້ອນ ຜູ້ໄດ້ຮັບການປະກັນໄພ ຕັ້ງໃຈກໍ່ໃຫ້ເກີດໂດຍເຈດຕະນາ.

5.13 ການສູນເສຍທີ່ເກີດຂຶ້ນຍ້ອນ ໄຟໄໝ້.

5.14 ການສູນເສຍທີ່ເກີດຂຶ້ນຍ້ອນ ລົດທີ່ໄດ້ຮັບການປະກັນໄພ ບັນທຸກວັດຖຸຕົ້ນກຳມັນຕະພາບລັງສີເພື່ອນຳໄປເປັນສ່ວນປະກອບດ້ານນອກຂອງການຜະລິດນິວເຄຼຍ, ນັບແຕ່ເວລານັ້ນເປັນຕົ້ນໄປ, ຕົ້ນກຳມັນຕະພາບລັງສີຂ້າງເທິງເປັນສາເຫດໃຫ້ເກີດການສູນເສຍ ຫຼື ຄວາມເສຍຫາຍຮຸນແຮງ.

5.15 ການສູນເສຍທີ່ເກີດຂຶ້ນຍ້ອນ ການກໍ່ຄວາມຮຸນແຮງ, ຂະບວນລຸກຮື້ຂອງປະຊາຊົນ ຫຼື ພຶດຕິກຳທີ່ມີກຸ່ມຄົນສົມຮູ້ຮ່ວມຄິດ ເຊິ່ງມີການນຳພາຢ່າງເປີດເຜີຍ.

**5.16** ການສູນເສຍທີ່ເກີດຂຶ້ນຍ້ອນ ການຂັບຂີ່ ຫຼື ຄວບຄຸມຍານພາຫະນະເຄື່ອງຈັກ ແລະ/ຫຼື ອຸປະກອນທີ່ຮັບໃຊ້ໃຫ້ແກ່ ການກະເສດ, ກໍ່ສ້າງ ຫຼື ມີຈຸດປະສົງອື່ນຄ້າຍຄືງນັ້ນ ນອກຈາກວ່າ: ພາຫະນະເຄື່ອງຈັກດັ່ງກ່າວໄດ້ຮັບອະນຸຍາດນຳໃຊ້ຕາມທ້ອງຖະໜົນ ເຊິ່ງຕ້ອງຢັ້ງຢືນດ້ວຍໃບອະນຸຍາດ, ໃບທະບຽນຍານພາຫະນະທີ່ຍັງມີອາຍຸການນຳໃຊ້ ຕະຫຼອດໄລຍະເວລາຂອງສັນຍາປະກັນໄພນີ້.

**5.17** ການສູນເສຍ, ຄ່າໃຊ້ຈ່າຍ ຫຼື ຄ່າເສຍຫາຍເກີດຂຶ້ນໂດຍກົງ ຫຼື ເກີດຂຶ້ນໂດຍທາງອ້ອມ, ເກີດຈາກ ຫຼື ມີການພົວພັນເຖິງ ການກະທຳທີ່ເປັນການກໍ່ການຮ້າຍໃດໜຶ່ງ, ບໍ່ວ່າເຫດຜົນໃດກໍ່ຕາມ ຫຼື ເຫດການໃດກໍ່ຕາມທີ່ປະກອບສ່ວນໃນເວລາດຽວກັນ ຫຼື ຕາມຂັ້ນຕອນໃດກໍ່ຕາມທີ່ນຳໄປສູ່ຄວາມເສຍຫາຍດັ່ງກ່າວ.

**5.18** ບໍລິສັດປະກັນໄພ ຈະບໍ່ຮັບຜິດຊອບຈ່າຍຄ່າຮ້ອງຟ້ອງໃດ ຫຼື ຈ່າຍໃຫ້ແກ່ສິດຜົນປະໂຫຍດໃດ ທີ່ພົວພັນເຖິງສັນຍາປະກັນໄພສະບັບນີ້ ໃນການອອກສັນຍາ, ການຈ່າຍສິນທົດແທນ ຫຼື ສະໜອງສິດຜົນປະໂຫຍດທີ່ເຮັດໃຫ້ ບໍລິສັດປະກັນໄພ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບ ການປັບໃໝ, ຄຳສັ່ງຫ້າມ ຫຼື ຂໍ້ຈຳກັດຕ່າງໆ ຕາມມະຕິຂອງສະຫະປະຊາຊາດ ຫຼື ທຸກຮູບການປັບໃໝທາງການຄ້າ ຫຼື ເສດຖະກິດ, ກົດໝາຍ ຫຼື ຂໍ້ກຳນົດຂອງ ສະຫະພາບເອີຣົບ, ອັງກິດ ຫຼື ສະຫະລັດອາເມລິກາ.

**3)** **ເງື່ອນໄຂພິເສດໃນການຄໍ້າປະກັນຄວາມເສຍຫາຍທີ່ເກີດຂຶ້ນສຳລັບ ຜູ້ໂດຍສານ:**

**5.19** ຕ້ອງບໍ່ຂັດກັບມາດຕາທີ່ລະບຸໄວ້ໃນຂໍ້ 5.1 ເຖິງ ຂໍ້ 5.18 ເຊິ່ງພົວພັນເຖິງ ໜ້າທີ່ຂອງຜູ້ໄດ້ຮັບການປະກັນໄພ ຕໍ່ກັບການເສຍຫາຍທີ່ເກີດຂຶ້ນຕໍ່ກັບການຂົນສົ່ງຜູ້ໂດຍສານ, ຂອບເຂດຂອງການຄໍ້າປະກັນຍັງຂຶ້ນກັບບັນດາເງື່ອນໄຂດັ່ງຕໍ່ໄປນີ້:

**ກ)** **ລັກສະນະການສູນເສຍ ທີ່ຖືກຄໍ້າປະກັນ:**

**5.20** ຂອບເຂດຂອງການຄໍ້າປະກັນດັ່ງກ່າວມາຂ້າງເທິງ ຈະນຳໃຊ້ຕໍ່ກັບການບາດເຈັບທາງດ້ານຮ່າງກາຍທີ່ເກີດຂຶ້ນກັບຜູ້ໂດຍສານໃນລົດທີ່ມີປະກັນໄພ ທີ່ຕ້ອງໄດ້ຮັບຜິດຊອບ ແລະ ເຄື່ອງນຸ່ງຫົ່ມທີ່ເສຍຫາຍຂອງພວກເຂົາແຕ່ຕ້ອງໃນກໍລະນີຖືກເສຍຫາຍທາງດ້ານຮ່າງກາຍເປັນສາຍເຫດ.

**ຂ)** **ເງື່ອນໄຂຂົນສົ່ງຜູ້ໂດຍສານ:**

**5.21** ສຳລັບລົດ 2 ລໍ້ ແລະ 3 ລໍ້

ລົດທີ່ໄດ້ຮັບການປະກັນໄພ ທີ່ບໍ່ບັນທຸກຜູ້ໂດຍສານເກີນ 1 ຄົນ ນອກຈາກຜູ້ຂັບລົດ (ຫຼື 2 ຄົນ ຖ້າຫາກລົດນັ້ນມີບ່ອນນັ່ງພຽງພໍ)

**5.22** ສຳລັບລົດເບົາ (ລວມທັງດັດແປງຕົວຖັງ), ລົດເມນ້ອຍ ແລະ ລົດເມ.

ສະເພາະກໍລະນີທີ່ຜູ້ໂດຍສານນັ່ງດ້ານໃນຂອງລົດທີ່ມີປະກັນໄພເທົ່ານັ້ນ.

**5.23** ສໍາລັບລົດທຸລະກິດ

ຜູ້ໂດຍສານທຸກຄົນຕ້ອງນັ່ງໃນຫ້ອງໂດຍສານ ຫຼື ໃນລົດທີ່ມີທີ່ນັ່ງ ຫຼື ໃນຍານພາຫະນະທີ່ປິດສະໜິດ.

**5.24** ສໍາລັບລົດພ່ວງ ແລະ ເຄິ່ງລົດພ່ວງ (ດ້ວຍເງື່ອນໄຂຕ້ອງແມ່ນ "ລົດທີ່ໄດ້ຮັບປະກັນໄພ" ຕາມຄວາມໝາຍໃນ ຂໍ້ 4.1)

ລົດດັ່ງກ່າວຕ້ອງຜະລິດຂຶ້ນ ເພື່ອຈຸດປະສົງຂົນສົ່ງຜູ້ໂດຍສານ ແລະ ຜູ້ໂດຍສານຕ້ອງນັ່ງຢູ່ໃນລົດພ່ວງ ຫຼື ເຄິ່ງລົດພ່ວງ.

**5.25** ນອກຈາກບັນດາເງື່ອນໄຂທີ່ໄດ້ກໍານົດ ແຕ່ຂໍ້ 5.21 ເຖິງ ຂໍ້ 5.24, ບັນດາເງື່ອນໄຂດັ່ງຕໍ່ໄປນີ້ ຈະຖືກນໍາໃຊ້:

- ຈໍານວນຜູ້ໂດຍສານ ແລະ/ຫຼື ຄວາມສາມາດໃນການບັນຈຸຜູ້ໂດຍສານ ຕ້ອງບໍ່ເກີນຈໍານວນບ່ອນນັ່ງ ແລະ/ຫຼື ຄວາມສາມາດໃນການບັນທຸກຕາມ ທີ່ຜູ້ຜະລິດໄດ້ກໍານົດໄວ້.
- ເດັກນ້ອຍອາຍຸຕໍ່າກວ່າ 10 ປີ, ທີ່ລະບຸໃນເງື່ອນໄຂນີ້ ຈະໄດ້ຄິດໄລ່ເປັນເຄິ່ງໜຶ່ງຂອງຜູ້ໃຫຍ່.
- ກໍລະນີລະເມີດເງື່ອນໄຂນີ້ທີ່ກ່ຽວຂ້ອງກັບຈໍານວນບ່ອນນັ່ງແມ່ນ ຈະຕ້ອງໄດ້ປະຕິບັດຕາມ ຂໍ້ 14.5 (ຂ).
- ບໍ່ທົດແທນໃນກໍລະນີທີ່ລະເມີດເງື່ອນໄຂທີ່ພົວພັນເຖິງ ຄວາມສາມາດໃນການບັນຈຸຄົນຜູ້ໂດຍສານທີ່ກໍານົດໄວ້ໃນສັນຍານີ້.

**ຄ) ຂໍ້ຍົກເວັ້ນທີ່ພົວພັນເຖິງ ຜູ້ໂດຍສານທີ່ຢູ່ໃນລົດທີ່ໄດ້ຮັບການປະກັນໄພ:**

**5.26** ຍົກເວັ້ນ ເມື່ອມີຂໍ້ກໍານົດກົງກັນຂ້າມ ໃນໃບຢັ້ງຢືນປະກັນໄພ, ຜູ້ໂດຍສານທີ່ບໍ່ໄດ້ເສຍຄ່າປີ້ຈະບໍ່ໄດ້ຮັບການຄຸ້ມກັນ.

**5.27** ສໍາລັບຂໍ້ 5.26 ຜູ້ໄດ້ຮັບການປະກັນໄພສາມາດຂໍປະກັນໄພພິເສດສໍາລັບຄວາມສ່ຽງຂອງຄົນໄດ້ຖ້າມີຄວາມຕ້ອງການເພີ່ມເຕີມ, ບົນພື້ນຖານຈະຕ້ອງໄດ້ຮັບການຍິນຍອມເຫັນດີຢ່າງຈະແຈ້ງ ດ້ວຍເອກະສານລາຍລັກອັກສອນ ຈາກບໍລິສັດປະກັນໄພ.

**4) ວົງເງິນຄໍ້າປະກັນ:**

**5.28** ບັນດາລາຍລະອຽດຂອບເຂດວົງເງິນຄໍ້າປະກັນຂອງຄວາມຮັບຜິດຊອບແມ່ນໄດ້ກໍານົດລະອຽດຢູ່ໃນສັນຍາປະກັນໄພ ແລະ / ຫຼື ໃບຢັ້ງຢືນການປະກັນໄພ.

**5.29** ຄ່າໃຊ້ຈ່າຍໃນການຮ້ອງຟ້ອງ, ການປົກປ້ອງສິດ ແລະ ຄ່າໃຊ້ຈ່າຍອື່ນໆ ບໍ່ໃຫ້ຫັກຈາກມູນຄ່າວົງເງິນຄ້ຳປະກັນທັງໝົດ. ເຖິງຢ່າງໃດກໍ່ຕາມ, ໃນກໍລະນີ ຫາກສານຕັດສິນໃຫ້ ເສຍຄ່າທຳນຽມສານທີ່ສູງກ່ວາວົງເງິນທີ່ໄດ້ລະບຸໄວ້, ບໍລິສັດປະກັນໄພ ແລະ ຜູ້ໄດ້ຮັບການປະກັນໄພ ຕ້ອງໄດ້ຮັບຜິດຊອບຄ່າໃຊ້ຈ່າຍສ່ວນນີ້ ຕາມອັດຕາສ່ວນຂອງຕົນໃນສ່ວນແບ່ງຕາມການຕັດສິນຂອງສານ.

**5) ໃບຢັ້ງຢືນປະກັນໄພ:**

**5.30** ຫຼັງການສະເໜີເຮັດປະກັນໄພ 15 (ສິບຫ້າ) ວັນ ຜູ້ຖືສັນຍາປະກັນໄພ ຈະໄດ້ຮັບໃບຢັ້ງຢືນປະກັນໄພຕາມກຳນົດຂອງກົດໝາຍ, ຜູ້ຂັບລົດທີ່ໄດ້ຮັບການປະກັນໄພ ຕ້ອງສະແດງໃບຢັ້ງຢືນປະກັນໄພເມື່ອເຈົ້າໜ້າທີ່ກວດ, ຖ້າບໍ່ດັ່ງນັ້ນຈະຖືກປັບໃໝ.

**5.31** ພາຍຫຼັງໄດ້ມອບໃບຢັ້ງຢືນປະກັນໄພ, ບໍລິສັດປະກັນໄພ ບໍ່ສາມາດປະຕິເສດການອອກໃບຮັບເງິນ ຫຼື ໃບບິນອາກອນທີ່ແຍກສະເພາະໃຫ້ເຈົ້າຂອງຜູ້ຖືສັນຍາປະກັນໄພ ຖ້າຫາກມີການສະເໜີຮ້ອງຂໍ.

**ມາດຕາ 6: ການຄ້ຳປະກັນຂໍ້ "ຂ": ຄວາມຮັບຜິດຊອບທາງແພ່ງນອກການສັນຈອນທາງບົກ:**

**1) ຂອບເຂດຂອງການຄ້ຳປະກັນ:**

**6.1** ເງື່ອນໄຂຄ້ຳປະກັນນີ້ ນຳໃຊ້ຕໍ່ຄວາມຮັບຜິດຊອບທີ່ຕິດພັນກັບຜົນກະທົບທາງການເງິນ ເຊິ່ງຜູ້ໄດ້ຮັບການປະກັນໄພຕ້ອງຮັບຜິດຊອບຍ້ອນ ການບາດເຈັບທາງຮ່າງກາຍ ແລະ/ຫຼື ຄວາມເສຍຫາຍທາງດ້ານວັດຖຸ ທີ່ເກີດຂຶ້ນກັບບຸກຄົນທີ່ສາມ ບໍ່ໄດ້ເກີດຂຶ້ນໃນຂະນະທີ່ລົດສັນຈອນ ແລະ ເປັນຜົນສືບເນື່ອງມາຈາກ ການກະທຳທີ່ໄດ້ລະບຸໄວ້ໃນເງື່ອນໄຂການຄ້ຳປະກັນ ຂໍ້ "ກ".

**6.2** ເຖິງຢ່າງໃດກໍ່ຕາມ, ຄວາມເສຍຫາຍທີ່ເກີດຈາກອຸປະກອນເສີມ ແລະ ຜະລິດຕະພັນຮັບໃຊ້ໃຫ້ແກ່ລົດທີ່ໄດ້ຮັບປະກັນໄພ ແລະ ການສູນເສຍທີ່ເກີດຈາກສິ່ງຂອງ ຫຼື ວັດຖຸອື່ນໆ ດ້ວຍເງື່ອນໄຂຕ້ອງບໍ່ແມ່ນ ອາໄຫຼ່ເສີມທີ່ສາມາດແຍກອອກຈາກລົດ ຫຼື ຕ້ອງແມ່ນຊິ້ນສ່ວນທີ່ປະກອບເຂົ້າກັບລົດ ຫຼື ພາກສ່ວນໃນລົດເທົ່ານັ້ນ.

**2) ຂໍ້ຍົກເວັ້ນ:**

**6.3** ບັນດາຂໍ້ຍົກເວັ້ນໄດ້ລະບຸໄວ້ແຕ່ຂໍ້ 5.4 ເຖິງ ຂໍ້ 5.18 ໄດ້ນຳໃຊ້ສຳລັບເງື່ອນໄຂປະກັນໄພຂໍ້ "ຂ".

**3) ວົງເງິນຄ້ຳປະກັນ:**

**6.4** ວົງເງິນຄ້ຳປະກັນຂອງເງື່ອນໄຂປະກັນໄພນີ້ໄດ້ກຳນົດໄວ້ແຕ່ ຂໍ້ 5.28 ເຖິງ ຂໍ້ 5.29.

ມາດຕາ 7: **ເງື່ອນໄຂການປະກັນໄພຂໍ້ "ຄ": ທຸກໆການເສຍຫາຍຈາກເຫດບັງເອີນ:**

**1) ຂອບເຂດຂອງການຄໍ້າປະກັນ:**

**7.1** ການຄໍ້າປະກັນນີ້ ນຳໃຊ້ຕໍ່ການສູນເສຍທີ່ເກີດຂຶ້ນຕໍ່ລົດທີ່ໄດ້ຮັບການປະກັນໄພ ທີ່ຈາກຕຳໃສ່ວັດຖຸຄົງທີ່, ເຄື່ອນທີ່ ຫຼື ລົດດັ່ງກ່າວປີ້ນຂວ້ຳ ທີ່ບໍ່ນອນໃນຂໍ້ຍົກເວັ້ນສະເພາະໃນຂໍ້ 7.19. ຂອບເຂດຂອງການຄໍ້າປະກັນເພີ່ມເຕີມທີ່ໄດ້ລະບຸໃນມາດຕາ 9 ເຖິງມາດຕາ 11 ກ່ຽວກັບ: ແກ້ວແວ່ນແຕກ, ໄຟໄໝ້, ການລັກ ລ້ອນແລ້ວແຕ່ລວມຢູ່ໃນການຄຸ້ມກັນນີ້, ຂຶ້ນກັບເງື່ອນໄຂຂອງຂໍ້ຍົກເວັ້ນ ແລະ/ຫຼື ເງື່ອນໄຂທີ່ກ່ຽວຂ້ອງແມ່ນມີລາຍລະອຽດໃນໃບຢັ້ງຢືນປະກັນໄພນີ້.

**7.2** ການຄໍ້າປະກັນນີ້ ລວມໄປເຖິງການສູນເສຍທີ່ເກີດຂຶ້ນໃນຂະນະທີ່ຂົນສົ່ງ (ລວມທັງການຂົນຂຶ້ນ ແລະ ຂົນລົງ) ດ້ວຍທາງບົກ ຫຼື ທາງນ້ຳພາຍໃນຂອບເຂດດິນແດນ ສປປ ລາວ.

**7.3** ປະກັນໄພນີ້ຈະຄຸ້ມກັນການສູນເສຍ ທີ່ເກີດຈາກຢາງຕີນລົດແຕກ ເຮັດໃຫ້ເກີດອຸປະຕິເຫດ ແລະ ກະທົບເຖິງ (ບັນດາ) ພາກສ່ວນອື່ນຂອງຍານພາຫະນະທີ່ໄດ້ຮັບການປະກັນໄພ.

**7.4** ການປະກັນໄພນີ້ແມ່ນຄຸ້ມກັນໃຫ້ອຸປະກອນທັງໝົດຂອງລົດທີ່ໄດ້ຮັບການປະກັນໄພ, ນັບທັງເຄື່ອງອາໄຫຼ່, ອຸປະກອນສ້ອມແປງ ແລະ ເຄື່ອງປ່ຽນຖ່າຍທີ່ມາພ້ອມກັບລົດ ໂດຍບໍ່ໄດ້ເພີ່ມມູນຄ່າລົດຄັນດັ່ງກ່າວທຽບກັບລົດລຸ້ນດຽວກັນ. ແຕ່ຖ້າວ່າບໍ່ສາມາດຊອກຊື້ເຄື່ອງອາໄຫຼ່ປ່ຽນຖ່າຍ ຫຼື ອຸປະກອນຈຳເປັນ ເພື່ອການສ້ອມແປງລົດດັ່ງກ່າວນັ້ນໄດ້ ພາຍໃນທ້ອງຖິ່ນ ຫຼື ກໍລະນີອຸປະກອນ ແລະ ອາໄຫຼ່ດັ່ງກ່າວເປັນເຄື່ອງໝົດສະໄໝ, ດັ່ງນັ້ນ ສິນທົດແທນປະກັນໄພທີ່ພົວພັນເຖິງອຸປະກອນ ຫຼື ອາໄຫຼ່ເຫຼົ່ານັ້ນ ຕ້ອງແມ່ນບໍ່ເກີນລາຄາລ່າສຸດທີ່ ສະໜອງໃຫ້ໂດຍ ຜູ້ສະໜອງອາໄຫຼ່ຂອງແທ້.

ບໍລິສັດປະກັນໄພ ສາມາດເລືອກໃນການຈ່າຍຄ່າສ້ອມແປງລົດ ຫຼື ທົດແທນເປັນເງິນສົດຕາມ ມູນຄ່າການສູນເສຍ ຫຼື ເປ່ເພເສຍຫາຍຂອງລົດທີ່ໄດ້ຮັບການປະກັນໄພ ຫຼື ສ້ອມແປງໃຫ້ກັບຄືນສູ່ສະພາບເດີມ ຫຼື ປ່ຽນແທນ ລົດທີ່ໄດ້ຮັບການປະກັນໄພ.

**2) ຂໍ້ຍົກເວັ້ນ:**

ບໍລິສັດປະກັນໄພ ບໍ່ຄຸ້ມກັນການເສຍຫາຍດັ່ງລຸ່ມນີ້:

**7.5** ການສູນເສຍທີ່ເກີດຂຶ້ນຍ້ອນ ຜູ້ໄດ້ຮັບການປະກັນໄພ ເຈດຕະນາກໍ່ເຫດ.

**7.6** ການສູນເສຍທີ່ເກີດຂຶ້ນກັບລົດທີ່ມີປະກັນໄພ, ເຊິ່ງຜູ້ໄດ້ຮັບການປະກັນໄພຂັບຂີ່ໃນຂະນະທີ່ສະຖານະພາບທີ່ມີຜົນກະທົບຈາກທາດເຫຼົ້າ ຫຼື ຢາເສບຕິດ ໃນຄະນະທີ່ເກີດອຸປະຕິເຫດ.

ຂໍ້ຍົກເວັ້ນນີ້ ບໍ່ມີຜົນນຳໃຊ້ ຖ້າຫາກມີຫຼັກຖານຢັ້ງຢືນວ່າ ອຸປະຕິເຫດ ທີ່ເກີດຂຶ້ນນັ້ນບໍ່ມີສ່ວນ ກ່ຽວພັນກັບສະພາບຂອງຜູ້ໄດ້ຮັບປະກັນໄພ ແລະ ນຳໃຊ້ກັບຜູ້ຂັບຂີ່ລົດຄັນດັ່ງກ່າວເທົ່ານັ້ນ.

**7.7** ການສູນເສຍທີ່ເກີດຂຶ້ນກັບລົດທີ່ມີປະກັນໄພທີ່ກຳລັງຂົນສົ່ງວັດຖຸໄວໄຟ, ວັດຖຸລະເບີດ, ວັດຖຸທີ່ເຊື່ອມສະພາບງ່າຍ ຫຼື ນ້ຳມັນເຊື້ອໄຟ ເຊິ່ງວັດຖຸເຫຼົ່ານີ້ຈະເຮັດໃຫ້ຄວາມເສຍຫາຍມີລະດັບອັນຕະລາຍເພີ່ມຂຶ້ນ. ເຖິງຢ່າງໃດກໍ່ຕາມຂໍ້ຍົກເວັ້ນນີ້ ຈະບໍ່ນຳໃຊ້ເຂົ້າໃນການຂົນສົ່ງນ້ຳມັນເຊື້ອໄຟ ຫຼື ແກັດ ຖ້ານ້ຳໜັກບໍ່ເກີນ 500 kg ຫຼື 600 ລິດ (ເຊິ່ງລວມທັງນ້ຳມັນໃນຖັງ ຫຼື ແກັດ ທີ່ຈຳເປັນສຳລັບຍານພາຫະນະຂົນສົ່ງ) ຫຼື ມີການຕົກລົງອື່ນ.

**7.8** ການສູນເສຍໃດໆທີ່ເກີດຂຶ້ນກັບລົດທີ່ໄດ້ຮັບປະກັນໄພ ໃນກໍລະນີຖືກຮ້ອງຂໍນຳໃຊ້ລົດຈາກ ທາງຕຳຫຼວດ ຫຼື ທະຫານ ຫຼື ອົງການຈັດຕັ້ງທີ່ມີອຳນາດລັດ.

**7.9** ການສູນເສຍທີ່ເກີດຂຶ້ນກັບລົດທີ່ໄດ້ຮັບການປະກັນໄພຍ້ອນ ສິນຄ້າ ຫຼື ວັດຖຸສິ່ງຂອງຕ່າງໆ ທີ່ບັນທຸກພາຍໃນ ຫຼື ເທິງລົດຄັນນັ້ນ.

**7.10** ການສູນເສຍທີ່ເກີດຂຶ້ນຈາກ ການຂົນສິນຄ້າຂຶ້ນ ແລະ ລົງຈາກລົດທີ່ໄດ້ຮັບປະກັນໄພ.

**7.11** ການສູນເສຍທີ່ເກີດຂຶ້ນໃນໄລຍະຈັດການແຂ່ງຂັນຄວາມໄວ ຫຼື ການແຂ່ງຂັນກິລາອື່ນໆ (ຫຼືການທົດລອງແຂ່ງຂັນ) ໃນຄະນະທີ່ໄດ້ຮັບອະນຸຍາດລ່ວງໜ້າຈາກ ອຳນາດການປົກຄອງຂອງລັດໃຫ້ສອດຄ່ອງກັບລະບຽບການໃນປະຈຸບັນ ແລະ ຜູ້ໄດ້ຮັບການປະກັນໄພ ເຂົ້າຮ່ວມການແຂ່ງຂັນດັ່ງກ່າວໃນຖານະນັກແຂ່ງຂັນ, ຜູ້ຈັດງານ ຫຼື ຜູ້ຕາງໜ້າໃຫ້ຜູ້ໃດຜູ້ໜຶ່ງທີ່ເຂົ້າຮ່ວມການແຂ່ງຂັນ.

**7.12** ການສູນເສຍເກີດຂຶ້ນ ຫຼື ໜັກໜ່ວງກວ່າຍ້ອນໄຟໄໝ້ ຫຼື ວັດຖຸລະເບີດດ້ວຍວິທີການປ່ຽນແປງໂຄງສ້າງນິວເຄຼຍ ຫຼື ບໍ່ວ່າຈະເປັນຜະລິດຕະພັນນິວເຄຼຍໃດ ຫຼື ສິ່ງເສດເຫຼືອຂອງກຳມັນຕະພາບລັງສີ ຫຼື ແຫຼ່ງກຳເນີດລັງສີ ionizing ເຊິ່ງກາຍເປັນຄວາມຮັບຜິດຊອບຂອງຜູ້ໃຊ້ອຸປະກອນນິວເຄຼຍດັ່ງກ່າວນັ້ນ.

**7.13** ການສູນເສຍທີ່ເກີດຈາກ ຍານພາຫະນະທີ່ໄດ້ຮັບການປະກັນໄພ ເມື່ອຂົນສົ່ງແຫຼ່ງກຳເນີດກະແສກຳມັນຕະພາບລັງສີເພື່ອນຳໄປໃຊ້ນອກໂຮງງານນິວເຄຼຍ ນັບແຕ່ເວລານັ້ນເປັນຕົ້ນໄປ, ແຫຼ່ງກຳເນີດກຳມະລັງສີທີ່ໄດ້ກ່າວມາຂ້າງເທິງໄດ້ເຮັດໃຫ້ເກີດການສູນເສຍ ຫຼື ເຮັດໃຫ້ການສູນເສຍເກີດຄວາມເສຍຫາຍເພີ່ມຂຶ້ນ.

**7.14** ການສູນເສຍທີ່ເກີດຈາກ ໄພທຳມະຊາດ, ລວມທັງບໍ່ຈຳກັດສະເພາະ ແຜ່ນດິນໄຫວ, ພູເຂົາໄຟລະເບີດ, ຄື້ນຟອງສຸນາມິ, ໄພນ້ຳຖ້ວມ, ພະຍຸ, ພະຍຸໃຕ້ຝຸ່ນ, ພະຍຸຕອກນາໂດ, ຄວາມເສຍຫາຍຂອງເຄື່ອງຈັກຍ້ອນ ນ້ຳເຂົ້າໃນເຄື່ອງຈັກລົດທີ່ກຳລັງເຄື່ອນໄຫວຢູ່ ເຂດນ້ຳຖ້ວມທີ່ຖືກຍົກເວັ້ນ.

**7.15** ຄ່າໃຊ້ຈ່າຍເກີດຂື້ນຈາກ ການເຄື່ອນຍ້າຍ ຫຼື ການຂົນສົ່ງຍານພາຫະນະທີ່ໄດ້ຮັບການປະກັນໄພ ໄປຫາອູ່ສ້ອມແປງບ່ອນຄືບເງື່ອນໄຂທີ່ໃກ້ທີ່ສຸດ ແລະ ຄ່າໃຊ້ຈ່າຍອື່ນໃນອູ່ສ້ອມແປງລົດທີ່ກ່ຽວຂ້ອງ ທີ່ເກີດຈາກ ອຸປະຕິເຫດສຳລັບລົດທີ່ໄດ້ຮັບການປະກັນໄພ.

ດ້ວຍເງື່ອນໄຂບັນດາຄ່າໃຊ້ຈ່າຍທັງໝົດນີ້ ບໍ່ໃຫ້ເກີນ 20% ຂອງຄ່າສ້ອມແປງລົດຕົວຈິງ ເຊິ່ງບໍລິສັດປະກັນໄພ ຕ້ອງຮັບຜິດຊອບ ແລະ ຄວາມຮັບຜິດຊອບສູງສຸດຂອງບໍລິສັດ ແມ່ນບໍ່ໃຫ້ເກີນບັນດາຂໍ້ກຳນົດໃນມາດຕານີ້.

ໃນກໍລະນີລົດເກີດອຸປະຕິເຫດຂື້ນ ຫຼື ການເປ່ເພໃດໆ, ລົດໄດ້ຖືກຈອດປະໄວ້ໂດຍບໍ່ມີຄົນເຝົ້າຮັກສາໂດຍບໍ່ມີວິທີການປ້ອງກັນທີ່ເໝາະສົມໃດໆ ເພື່ອຫຼີກລ້ຽງການສູນເສຍ ຫຼື ການເປ່ເພຕື່ມ ຫຼື ໃນກໍລະນີທີ່ລົດຢູ່ໃນສະພາບທີ່ບໍ່ສາມາດໝູນລໍ້ໄດ້ຢ່າງປອດໄພບົນທ້ອງຖະໜົນ ກ່ອນມີການສ້ອມແປງທີ່ຈຳເປັນ, ຄວາມເສຍຫາຍໃດໆທີ່ເກີດຂື້ນເພີ່ມເຕີມ ຫຼື ຮ້າຍແຮງຂື້ນໃຫ້ກັບລົດຄັນດັ່ງກ່າວ ແມ່ນຈະຖືກຍົກເວັ້ນ.

**7.16** ການສູນເສຍທາງອ້ອມເຊັ່ນ: ການລະງັບສິດນຳໃຊ້ລົດ, ການຂາດລາຍຮັບ ແລະ ຫຼຸດມູນຄ່າເສື່ອມຂອງຍານພາຫະນະ.

**7.17** ຄວາມເສຍຫາຍເຊິ່ງເກີດຈາກ ຄວາມຜິດພາດຂອງການບຳລຸງຮັກສາ, ການຫຼູ້ຍຫຽ້ນ, ການເປ່ເພ ຫຼື ຜິດພາດໃນຂັ້ນຕອນການຜະລິດລົດ, ການກະຕຸກກະຕິ ຫຼື ສະພາບເສັ້ນທາງທີ່ເປເພສົ່ງຜົນສະທ້ອນເຖິງການເຄື່ອນໄຫວຂອງລົດທີ່ໄດ້ຮັບການປະກັນໄພ ແລະ ການສູນເສຍ ຍ້ອນເປ່ເພຍ້ອນເຄື່ອງອາໄຫຼ່ທີ່ຕິດຕັ້ງພາຍໃນ ຫຼື ຢູ່ເທິງລົດທີ່ໄດ້ຮັບການປະກັນໄພ.

**7.18** ການສູນເສຍທີ່ເກີດຂື້ນໃນຂະນະທີ່ລົດໄດ້ຮັບການປະກັນໄພຂົນສົ່ງ ຫຼື ບັນທຸກເກີນຈຳນວນບ່ອນນັ່ງ ແລະ/ຫຼື ຄວາມສາມາດໃນການບັນທຸກ ທີ່ຜູ້ຜະລິດໄດ້ກຳນົດໄວ້, ບໍ່ວ່າສິ່ງໃດທີ່ກໍ່ໃຫ້ເກີດຄວາມເສຍຫາຍນັ້ນ ຫຼື ບໍ່ກໍຕາມ.

**7.19** ໃນກໍລະນີຍານພາຫະນະທີ່ໄດ້ຮັບການປະກັນໄພຖືກປີ້ນຂວ້ຳ, ບັນດາຄວາມເສຍຫາຍໜຶ່ງດຽວທີ່ໄດ້ຮັບປະກັນໄພແມ່ນ ຄວາມເສຍຫາຍໂດຍກົງທີ່ເກີດຂື້ນຍ້ອນ ແຮງກະແທກຂອງລົດເວລາລົດພິກຂວ້ຳ.

**7.20** ຄວາມເສຍຫາຍ ຫຼື ການສູນເສຍ, ຄ່າໃຊ້ຈ່າຍບໍ່ວ່າລະດັບໃດກໍ່ຕາມ ບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມທີ່ເກີດຂື້ນ ຫຼື ພົວພັນເຖິງການກໍ່ການຮ້າຍ ທີ່ເປັນສາເຫດບໍ່ວ່າຈະເປັນສາເຫດໃດ ຫຼື ເຫດການໃດໜຶ່ງທີ່ເປັນອົງປະກອບສ່ວນໃນເຫດການ ຫຼື ບໍ່ວ່າຈະນອນຂັ້ນຕອນໃດກໍ່ຕາມ ທີ່ນຳໄປເຖິງການສູນເສຍນັ້ນ.

7.21 ຄວາມເສຍຫາຍ ຫຼື ການສູນເສຍ ທີ່ເກີດຈາກ ຫຼື ຜ່ານ ຫຼື ຜົນກະທົບໂດຍກົງ ຫຼື ໂດຍທາງອ້ອມຈາກສົງຄາມ, ການຮຸກຮານ, ການກະທຳສັດຕູຕ່າງຊາດ, ການກະທຳທີ່ເປັນສັດຕູ ຫຼື ສົງຄາມກາງເມືອງ (ເຖິງຈະປະກາດເປີດສົງຄາມ ຫຼື ບໍ່ກໍຕາມ), ສົງຄາມການເມືອງ, ການຈໍລະຈົນ, ການກໍ່ກະບົດຄັ້ງໃຫຍ່ ທີ່ມີຂະໜາດ ຫຼື ມີແນວໂນ້ມທີ່ຈະພັດທະນາໄປສູ່ການລຸກຮືຂຶ້ນຄັ້ງໃຫມ່, ການລັດຖະປະຫານການທະຫານ, ການກະບົດ, ການປະຕິວັດ, ກຳລັງທະຫານບຸກໂຈມຕີ ຫຼື ທຸກການກະທຳໃດກໍ່ຕາມ ຂອງບຸກຄົນໃດ ຫຼື ກຸ່ມຄົນໃດໜຶ່ງທີ່ຕາງໜ້າໃຫ້ອົງການຈັດຕັ້ງໃດທີ່ມີຈຸດປະສົງປະກອບມີການໂຄ່ນລົ້ມ ຫຼື ສົ່ງຜົນສະທ້ອນເຖິງລັດຖະບານໃນສະພາບຄວາມເປັນຈິງ ຫຼື ຕາມກົດໝາຍໂດຍການກໍ່ການຮ້າຍ ຫຼື ວິທີການຮຸນແຮງອື່ນໃດ.

7.22 ບໍລິສັດປະກັນໄພ ຈະບໍ່ຮັບຜິດຊອບຈ່າຍຄ່າຮ້ອງຟ້ອງໃດ ຫຼື ຈະບໍ່ຈ່າຍໃຫ້ກັບສິດຜົນປະໂຫຍດໃດ ທີ່ນອກເໜືອຈາກ ສັນຍາປະກັນໄພສະບັບນີ້, ການຈ່າຍສິນທົດແທນ ຫຼື ສະໜອງສິດຜົນປະໂຫຍດທີ່ສົ່ງຜົນໃຫ້ບໍລິສັດປະກັນໄພຕ້ອງຮັບຜິດຊອບບໍ່ວ່າຈະເປັນຄ່າໃຊ້ຈ່າຍໃດທີ່ກ່ຽວຂ້ອງກັບການປັບໃໝ, ຄຳສັ່ງຫ້າມ ຫຼື ຂໍ້ຈຳກັດຕ່າງໆ ຕາມມະຕິຂອງສະຫະປະຊາຊາດ ຫຼື ທຸກຮູບການປັບໄໝທາງການຄ້າ ຫຼື ເສດຖະກິດ, ກົດໝາຍ ຫຼື ຂໍ້ກຳນົດຂອງສະຫະພາບເອີຣົບ, ອັງກິດ ຫຼື ສະຫະລັດອາເມລິກາ.

**3) ພື້ນຖານການຈ່າຍສິນທົດແທນ:**

7.23 ການປະກັນໄພນີ້ ຄຸ້ມກັນໃຫ້ພຽງແຕ່ການສູນເສຍ, ທີ່ອີງຕາມມູນຄ່າທີ່ຄິດໄລ່ເປັນເງິນຂອງລົດ ໃນມື້ທີ່ເກີດຄວາມເສຍຫາຍ, ທີ່ຍັງເຫຼືອຈາກ ການຫັກຄ່າຕ່າງໆຕາມທີ່ໄດ້ລະບຸໄວ້ໃນໃບຢັ້ງຢືນປະກັນໄພ.

**ມາດຕາ 8: ເງື່ອນໄຂປະກັນໄພຂໍ້ "ງ": ການເສຍຫາຍທີ່ເກີດຈາກ ການຕຳກັນ:**

**1) ຂອບເຂດຂອງການຄ້ຳປະກັນ:**

8.1 ເງື່ອນໄຂປະກັນໄພນີ້ ນຳໃຊ້ໃຫ້ແກ່ບັນດາຄວາມເສຍຫາຍທີ່ເກີດຈາກ ການຕຳກັນທີ່ເກີດຂຶ້ນຢູ່ນອກກາລາແປງລົດ, ບ່ອນມ້ຽນລົດ ຫຼື ສະຖານທີ່ຄອບຄອງໂດຍຜູ້ປະກັນຕົນ, ບໍ່ວ່າຈະດ້ວຍຍານພາຫະນະໃດ ຫຼື ສັດ ຫຼື ຄົນຍ່າງຜູ້ໃດຜູ້ໜຶ່ງ, ຍົກເວັ້ນແຕ່ຜູ້ໄດ້ຮັບການປະກັນໄພແມ່ນເຈົ້າຂອງຍານພາຫະນະ ຫຼື ສັດ ຫຼື ຄົນຍ່າງທີ່ມີສ່ວນກ່ຽວຂ້ອງ.

8.2 ການຄ້ຳປະກັນນີ້ ຄຸ້ມກັນໃຫ້ອຸປະກອນປະກອບສ້າງທັງໝົດຂອງຍານພາຫະນະທີ່ໄດ້ຮັບການປະກັນໄພ, ນັບທັງເຄື່ອງອາໄຫຼ່, ອຸປະກອນສ້ອມແປງ ແລະ ຊິ້ນສ່ວນອາໄຫຼ່ທີ່ມາພ້ອມກັບລົດໂດຍບໍ່

ໄດ້ເພີ່ມມູນຄ່າລົດຄັນດັ່ງກ່າວທຽບກັບລົດລຸ້ນດຽວກັນ. ແຕ່ຖ້າວ່າບໍ່ສາມາດຊອກຊື້ເຄື່ອງອາໄຫຼ່ ປ່ຽນຖ່າຍ ຫຼື ອຸປະກອນຈຳເປັນ ເພື່ອການສ້ອມແປງລົດດັ່ງກ່າວນັ້ນໄດ້ ພາຍໃນທ້ອງຖິ່ນ ຫຼື ຖ້າວ່າເຄື່ອງອຸປະກອນອາໄຫຼ່ດັ່ງກ່າວຫາກເປັນເຄື່ອງໝົດສະໄໝ, ສິນທົດແທນປະກັນໄພສຳລັບຊີ້ ຊິ້ນສ່ວນ ຫຼື ເຄື່ອງປະກອບເຫຼົ່ານັ້ນ ແມ່ນຕ້ອງບໍ່ເກີນລາຄາລ່າສຸດທີ່ສະໜອງໃຫ້ໂດຍຜູ້ສະໜອງ ອາໄຫຼ່ຂອງແທ້.

ບໍລິສັດປະກັນໄພ ສາມາດທີ່ຈະເລືອກໃນການຈ່າຍຄ່າສ້ອມແປງລົດ ຫຼື ການທົດແທນເປັນ ເງິນສົດຕາມມູນຄ່າການສູນເສຍ ຫຼື ເປ່ເພເສຍຫາຍຂອງຍານພາຫະນະທີ່ໄດ້ຮັບການປະກັນໄພ ຫຼື ການສ້ອມແປງໃຫ້ກັບຄືນສູ່ສະພາບເດີມ ຫຼື ການປ່ຽນແທນລົດທີ່ໄດ້ຮັບການປະກັນໄພ.

**2) ຂໍ້ຍົກເວັ້ນ:**

**8.3** ບັນດາຂໍ້ຍົກເວັ້ນທີ່ໄດ້ລະບຸແຕ່ຂໍ້ 7.5 ຫາຂໍ້ 7.22 ຈະໄດ້ນຳໃຊ້ໃຫ້ແກ່ເງື່ອນໄຂປະກັນໄພຂໍ້ "ງ".

**3) ພື້ນຖານການຈ່າຍສິນທົດແທນ:**

**8.4** ການປະກັນໄພນີ້ ຄຸ້ມກັນໃຫ້ແຕ່ການສູນເສຍ, ທີ່ຂຶ້ນກັບມູນຄ່າຂອງລົດທີ່ຄິດໄລ່ເປັນເງິນໃນມື້ທີ່ ເກີດຄວາມເສຍຫາຍ ທີ່ເຫຼືອຈາກການຫັກຄ່າຕ່າງໆຕາມທີ່ໄດ້ລະບຸໄວ້ໃນໃບຢັ້ງຢືນປະກັນໄພ.

## ມາດຕາ 9: ເງື່ອນໄຂປະກັນໄພ ຂໍ້ "ຈ": ແກ້ວແອ່ນແຕກ:

**1) ຂອບເຂດຂອງການຄ້ຳປະກັນ:**

**9.1** ເງື່ອນໄຂປະກັນໄພນີ້ ນຳໃຊ້ເພື່ອທົດແທນຄ່າໃຊ້ຈ່າຍໃນການຟື້ນຟູແກ້ວ, ແກ້ວແອ່ນໜ້າ, ແກ້ວ ແອ່ນປະຕູ, ແກ້ວແອ່ນຂ້າງ ແລະ ແກ້ວແອ່ນເທິງຫຼັງຄາ ຂອງລົດທີ່ໄດ້ຮັບການປະກັນໄພ, ເຖິງ ແມ່ນວ່າຈະມາຈາກຜົນກະທົບໂດຍກົງຈາກອຸປະຕິເຫດ ຫຼືບໍ່ ກໍຕາມ.

**2) ຂໍ້ຍົກເວັ້ນ:**

**9.2** ຂໍ້ຍົກເວັ້ນທີ່ໄດ້ກຳນົດໄວ້ໃນຂໍ້ 7.5 ຫາ ຂໍ້ 7.22 ແມ່ນໃຊ້ສຳລັບການປະກັນໄພ ຂໍ້ "ຈ".

**3) ພື້ນຖານການຈ່າຍສິນທົດແທນ:**

**9.3** ການປະກັນໄພນີ້ ຄຸ້ມກັນໃຫ້ມູນຄ່າຄວາມເສຍຫາຍລວມໄປເຖິງຄ່າປ່ຽນແອ່ນແກ້ວລົດ, ລວມມີ ອຸປະກອນທີ່ຈຳເປັນໃຫ້ແກ່ການປ່ຽນຖ່າຍ ແລະ ຄ່າສ້ອມແປງ.

ມາດຕາ 10: ເງື່ອນໄຂປະກັນໄພ ຂໍ້ "ສ": ໄຟໄໝ້:

1) ຂອບເຂດຂອງການຄ້ຳປະກັນ:

10.1 ການຄ້ຳປະກັນນີ້ ແມ່ນຄ້ຳປະກັນຄວາມເສຍຫາຍທີ່ເກີດຈາກໄຟໄໝ້, ຟ້າຜ່າ ຫຼື ການລະເບີດ.

10.2 ການສູນເສຍທີ່ເກີດຈາກ ອຸປະກອນໄຟຟ້າທີ່ບໍ່ໄດ້ປະກັນໄພເປັນສາເຫດຈະບໍ່ໄດ້ຮັບການຄຸ້ມກັນ, ນອກຈາກວ່າ ການສູນເສຍນັ້ນຫາກແມ່ນ ຜົນສືບເນື່ອງມາຈາກ ການເປ່ເພໂດຍບໍ່ຄາດຄິດຂອງອຸປະກອນຂ້າງເທິງນີ້.

10.3 ປະກັນໄພນີ້ ຄຸ້ມກັນໃຫ້ອຸປະກອນທັງໝົດຂອງອົງປະກອບລົດທີ່ໄດ້ຮັບການປະກັນໄພ, ລວມມີ: ເຄື່ອງອາໄຫຼ່, ອຸປະກອນສ້ອມແປງ ແລະ ເຄື່ອງປຸ່ງນຖ່າຍທີ່ຜະລິດມາພ້ອມກັບລົດ ໂດຍບໍ່ໄດ້ເພີ່ມມູນຄ່າລົດຄັນດັ່ງກ່າວທຽບກັບລົດລຸ້ນດຽວກັນ ແມ່ນຈະໄດ້ຮັບການຄ້ຳປະກັນທັງໝົດ. ແຕ່ຖ້າວ່າບໍ່ສາມາດຊອກຊື້ເຄື່ອງອາໄຫຼ່ປຸ່ງນຖ່າຍ ຫຼື ອຸປະກອນຈຳເປັນ ເພື່ອການສ້ອມແປງລົດດັ່ງກ່າວນັ້ນໄດ້ ພາຍໃນທ້ອງຖິ່ນ ຫຼື ຖ້າວ່າເຄື່ອງອຸປະກອນອາໄຫຼ່ດັ່ງກ່າວຫາກເປັນເຄື່ອງໝົດສະໄໝ, ສິນທົດແທນປະກັນໄພສຳລັບຊິ້ນສ່ວນ ຫຼື ເຄື່ອງປະກອບເຫຼົ່ານັ້ນ ແມ່ນຕ້ອງບໍ່ເກີນລາຄາລ່າສຸດທີ່ສະໜອງໃຫ້ໂດຍຜູ້ສະໜອງອາໄຫຼ່ຂອງແທ້.

2) ຂໍ້ຍົກເວັ້ນ:

ນອກເໜືອຈາກຂໍ້ຍົກເວັ້ນທີ່ໄດ້ກ່າວໄວ້ໃນຂໍ້ 7.5 ຫາ ຂໍ້ 7.22 ແມ່ນບັນດາຄວາມເສຍຫາຍລຸ່ມນີ້ນອນໃນຂໍ້ຍົກເວັ້ນ:

10.4 ຄວາມເສຍຫາຍທີ່ເກີດຈາກ ທາດລະເບີດທຸກຊະນິດ ທີ່ບັນທຸກຢູ່ດ້ານໃນ ຫຼື ເທິງລົດທີ່ໄດ້ຮັບການປະກັນໄພ.

10.5 ຄວາມເສຍຫາຍທີ່ບໍ່ຖືວ່າມີຜົນມາຈາກ ໄຟໄໝ້ ໂດຍສະເພາະແມ່ນເກີດມີຄວາມຮ້ອນ ທີ່ເກີດຈາກອຸນນະພູມສູງເກີນຂອບເຂດກຳນົດໂດຍບໍ່ມີແປວໄຟລຸກຂຶ້ນ ແລະ ອຸປະຕິເຫດທີ່ເກີດຂຶ້ນຍ້ອນການສູບຢາ.

3) ພື້ນຖານການຈ່າຍສິນທົດແທນ:

10.6 ການປະກັນໄພນີ້ ປະກັນໄພໃຫ້ແຕ່ຄວາມເສຍຫາຍ, ສູງສຸດເຖິງມູນຄ່າທີ່ຄິດໄລ່ເປັນເງິນຂອງລົດໃນມື້ທີ່ເກີດຄວາມເສຍຫາຍ, ທີ່ເຫຼືອຈາກ ການຫັກຄ່າຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນໃບຢັ້ງຢືນປະກັນໄພ.

ມາດຕາ 11: ເງື່ອນໄຂປະກັນໄພ ຂໍ້ "ຊ": ການລັກ:

1) ຂອບເຂດຂອງການຄໍ້າປະກັນ:

11.1 ປະກັນໄພນີ້ ແມ່ນນໍາໃຊ້ໃຫ້ແກ່ຄວາມເສຍຫາຍທີ່ເກີດຈາກ ການຫາຍສາບສູນຂອງຕົວລົດທີ່ມີປະກັນໄພ ຫຼື ເປ່ເພເນື່ອງຈາກການລັກ ຫຼື ແຜນການພະຍາຍາມລັກ. ໂດຍຜ່ານການເຫັນດີຂອງບໍລິສັດປະກັນໄພ. ການປະກັນໄພນີ້ຍັງກວມເອົາຄ່າໃຊ້ຈ່າຍ ເຊິ່ງຜູ້ໄດ້ຮັບການປະກັນໄພໄດ້ສະໜອງໃຫ້ ຫຼື ຍອມຮັບຕາມລະດັບຄວາມເໝາະສົມໃນການກອບກູ້ລົດຂອງ ຜູ້ໄດ້ຮັບການປະກັນໄພທີ່ຖືກລັກນັ້ນຄືນມາ.

11.2 ປະກັນໄພນີ້ ຄຸ້ມກັນໃຫ້ອຸປະກອນທັງໝົດທີ່ປະກອບຂອງລົດທີ່ໄດ້ຮັບການປະກັນໄພ, ລວມມີເຄື່ອງອາໄຫຼ່, ອຸປະກອນສ້ອມແປງ ແລະ ເຄື່ອງປຸ່ງນຖ່າຍທີ່ມາພ້ອມກັບລົດ ໂດຍບໍ່ໄດ້ເພີ່ມມູນຄ່າລົດຄັນດັ່ງກ່າວຫຼຸບກັບລົດລຸ້ນນັ້ນແມ່ນຈະໄດ້ຮັບການຄໍ້າປະກັນທັງໝົດ. ແຕ່ຖ້າວ່າບໍ່ສາມາດຊອກຊື້ເຄື່ອງອາໄຫຼ່ປຸ່ງນຖ່າຍ ຫຼື ອຸປະກອນຈໍາເປັນ ເພື່ອການສ້ອມແປງລົດດັ່ງກ່າວນັ້ນໄດ້ ພາຍໃນທ້ອງຖິ່ນ ຫຼື ຖ້າວ່າເຄື່ອງອຸປະກອນອາໄຫຼ່ດັ່ງກ່າວຫາກເປັນເຄື່ອງໝົດສະໄໝ, ສິນທົດແທນປະກັນໄພສໍາລັບຊື້ຊິ້ນສ່ວນ ຫຼື ເຄື່ອງປະກອບເຫຼົ່ານັ້ນ ແມ່ນຕ້ອງບໍ່ເກີນລາຄາລ່າສຸດທີ່ສະໜອງໃຫ້ໂດຍຜູ້ສະໜອງອາໄຫຼ່ຂອງແທ້.

11.3 ເຖິງຢ່າງໃດກໍ່ຕາມ, ປະກັນໄພນີ້ ບໍ່ຄຸ້ມກັນຂອບເຂດການລັກຊິ້ນສ່ວນພາຍນອກໃດໆ ຂອງລົດທີ່ໄດ້ຮັບການປະກັນໄພ, ເວັ້ນເສຍວ່າການລັກນີ້ ໄດ້ເກີດຂຶ້ນໃນເຮືອນຈອດລົດໂດຍການບຸກລຸກເຂົ້າໄປລັກ, ການນໍາໃຊ້ກະແຈລົດອະເນກປະສົງ, ການປີ້ນກໍາແພງເຂົ້າ ຫຼື ການໂຈມຕີ.

2) ຂໍ້ຍົກເວັ້ນ:

ນອກເໜືອຈາກຂໍ້ຍົກເວັ້ນທີ່ໄດ້ກໍານົດໄວ້ໃນຂໍ້ 7.5 ຫາຂໍ້ 7.22 ບັນດາກໍລະນີລຸ່ມນີ້ແມ່ນບໍ່ໄດ້ຮັບການຄຸ້ມກັນ:

11.4 ພຶດຕິກໍາການລັກເກີດຈາກພະນັກງານຂອງຜູ້ໄດ້ຮັບການປະກັນໄພເປັນຜູ້ລັກ ໃນເວລາເຮັດວຽກ.

11.5 ພຶດຕິກໍາການລັກ ເກີດຈາກສະມາຊິກພາຍໃນຄອບຄົວຂອງຜູ້ໄດ້ຮັບການປະກັນໄພທີ່ອາໄສຢູ່ນໍາກັນກັບຜູ້ໄດ້ຮັບການປະກັນໄພ ຫຼື ມີການປະຕິບັດແບບສົມຮູ້ຮ່ວມຄິດນໍາກັນ.

**3)** **ພື້ນຖານການຈ່າຍສິນທົດແທນ:**

**11.6** ການປະກັນໄພນີ້ ທົດແທນໃຫ້ສະເພາະຄວາມເສຍຫາຍສູງສຸດດ້ວຍມູນຄ່າທີ່ຄິດໄລ່ເປັນເງິນສົດໃຫ້ກັບລົດທີ່ໄດ້ຮັບການປະກັນໄພ ໃນມື້ທີ່ເກີດມີພຶດຕິກຳການລັກ, ທີ່ເຫຼືອຈາກການຫັກຄ່າຕ່າງໆທີ່ລະບຸໄວ້ໃນໃບຢັ້ງຢືນປະກັນໄພ.

**ມາດຕາ 12:** **ເງື່ອນໄຂປະກັນໄພ ຂໍ້ "ຍ": ການປົກປ້ອງສິດ ແລະ ການຮຽກຮ້ອງສິນທົດແທນຄືນ:**

ພາຍໃນຂອບເຂດວົງເງິນສິນທົດແທນ ໃຫ້ແຕ່ລະການເສຍຫາຍທີ່ໄດ້ກຳນົດໄວ້ ໃນໃບຢັ້ງຢືນປະກັນໄພ, ແລະ ດ້ວຍເງື່ອນໄຂຈຸດປະສົງຂອງການນຳໃຊ້ພາຫະນະທີ່ໄດ້ຮັບປະກັນໄພສອດຄ່ອງກັບໃບຢັ້ງຢືນປະກັນໄພ, ບໍລິສັດປະກັນໄພໄດ້ໃຫ້ຄຳໝັ້ນສັນຍາ:

**12.1** ຊຳລະຄ່າໃຊ້ຈ່າຍໃນການປົກປ້ອງສິດ ໃຫ້ຜູ້ໄດ້ຮັບການປະກັນໄພກ່ອນນັ້ນສານ ໂດຍອີງຕາມ ຂໍ້ 3.7 (ຄ), ຖ້າຜູ້ໄດ້ຮັບການປະກັນໄພ ຖືກດຳເນີນຄະດີໃນການລະເມີດກົດໝາຍ ໃນເວລາເກີດເຫດ ແລະ ການກະທຳດັ່ງກ່າວໄດ້ຮັບການປະກັນໄພຕາມສັນຍາປະກັນໄພນີ້; ແລະ

**12.2** ຊຳລະຄ່າໃຊ້ຈ່າຍສ້ອມແປງລົດທີ່ໄດ້ຮັບການປະກັນໄພຕາມຂໍ້ກຳນົດຢູ່ໃນຂໍ້ແຕ່ 18.15 ຫາ ຂໍ້ 18.19 ທີ່ກ່ຽວຂ້ອງ:

**i.** ຄວາມເສຍຫາຍທາງດ້ານຮ່າງກາຍ ທີ່ເກີດຂຶ້ນກັບ ຜູ້ໄດ້ຮັບການປະກັນໄພ ໄດ້ຖືກອະທິບາຍໃນຂໍ້ 3.7 (ຄ); ແລະ

**ii.** ການສູນເສຍດ້ານວັດຖຸທີ່ເກີດຂຶ້ນກັບລົດທີ່ໄດ້ຮັບການປະກັນໄພ ພ້ອມດ້ວຍສິ່ງຂອງທີ່ມີຢູ່ໃນລົດທີ່ໄດ້ຮັບການປະກັນໄພ ເມື່ອວັດຖຸດັ່ງກ່າວບໍ່ໄດ້ຮັບການຄຸ້ມກັນຈາກສັນຍາປະກັນໄພອື່ນ.

**12.3** ເງື່ອນໄຂຂອງການປະກັນໄພ "ການຮຽກຮ້ອງສິນທົດແທນຄືນ" ມີຜົນບັງຄັບໃຊ້ກໍ່ຕໍ່ເມື່ອຄວາມເສຍຫາຍດັ່ງກ່າວເກີດຂຶ້ນ ໂດຍບຸກຄົນອື່ນທີ່ບໍ່ແມ່ນ ຜູ້ໄດ້ຮັບການປະກັນໄພເປັນຜູ້ກໍ່ເຫດ ຕາມທີ່ໄດ້ລະບຸໃນຂໍ້ 3.7(ຄ).

**ມາດຕາ 13:** **ການຄ້ຳປະກັນ "ດ": ຜູ້ຂັບລົດ ແລະ ຜູ້ໂດຍສານ:**

**1)** **ຂອບເຂດຂອງການຄ້ຳປະກັນ:**

**13.1** ຕາມການຕົກລົງໃນສັນຍາສະບັບນີ້ ບໍລິສັດປະກັນໄພ ຈະສະໜອງການທົດແທນຄືນດ້ານການເງິນປະກັນໄພ ແລະ ຈຳນວນເງິນທີ່ລະບຸໄວ້ໃນໃບຢັ້ງຢືນປະກັນໄພ ທີ່ກ່ຽວຂ້ອງກັບຄວາມເສຍຫາຍດ້ານຮ່າງກາຍຂອງຜູ້ໄດ້ຮັບການປະກັນໄພ.

2) ຂໍ້ຍົກເວັ້ນ:

**13.2** ບັນດາເງື່ອນໄຂຂໍ້ຍົກເວັ້ນທີ່ໄດ້ກຳນົດແຕ່ຂໍ້ 7.5 ຫາ ຂໍ້ 7.22.

**13.3** ໃນກໍລະນີຜູ້ໄດ້ຮັບການປະກັນໄພເສຍຊີວິດຈາກອຸປະຕິເຫດທາງບົກ ພາຍໃນ 24 (ຊາວສີ່) ເດືອນ ນັບແຕ່ວັນທີເກີດອຸປະຕິເຫດ ແລະ ໄດ້ຮັບການຄຸ້ມກັນຕາມສັນຍາປະກັນໄພນີ້, ບໍລິສັດປະກັນໄພ ຈະຈ່າຍສິນທົດແທນໃຫ້ ເມຍ/ຜົວ ທີ່ຍັງມີຊີວິດຂອງ ຜູ້ໄດ້ຮັບການປະກັນໄພ ຕາມຈຳນວນເງິນທີ່ ໄດ້ລະບຸໄວ້ໃນໃບຢັ້ງຢືນປະກັນໄພ, ຖ້າເມຍ/ຜົວຂອງ ຜູ້ໄດ້ຮັບການປະກັນໄພເສຍຊີວິດ ແມ່ນຈະ ຈ່າຍສິນທົດແທນໃຫ້ຜູ້ທີ່ໄດ້ຮັບມໍລະດົກ ຫຼື ຜູ້ໄດ້ຮັບສິດທິຂອງຜູ້ໄດ້ຮັບການປະກັນໄພ ແລະ ໃນ ກໍລະນີນີ້ ບໍລິສັດປະກັນໄພ ຈະບໍ່ມີໜ້າທີ່ໃນການແບ່ງປັນ ອັດຕາສ່ວນສິນທົດແທນທີ່ຊຳລະນັ້ນ. ສຳລັບພາກສ່ວນຂອງຕົນ, ຜູ້ຖືສັນຍາປະກັນໄພ ກໍ່ມີສິດທີ່ຈະກຳນົດເອົາຄົນໜຶ່ງເພື່ອຮັບຜົນປະ ໂຫຍດໃນການຮັບເອົາສິນທົດແທນປະກັນໄພ.

**13.4** ໃນກໍລະນີຜູ້ໄດ້ຮັບການປະກັນໄພໄດ້ຮັບບາດເຈັບພິການບາງສ່ວນ ຫຼື ພິການຖາວອນທັງໝົດ ບໍລິສັດຈະຈ່າຍເງິນບາງຈຳນວນ ຕາມອັດຕາການພິການທີ່ໄດ້ກຳນົດໄວ້ໃນຕາຕະລາງອັດຕາການ ປະກັນໄພ ທີ່ລະບຸໃນເອກະສານຊ້ອນທ້າຍ 03. ຈຳນວນເງິນຄ້ຳປະກັນສູງສຸດທີ່ຖືກກຳນົດໃນ ໃບຢັ້ງຢືນປະກັນໄພ ຈະຖືກຫຼຸດລົງຕາມອັດຕາສ່ວນຂອງຄວາມພິການ.

ການຈ່າຍເງິນຊົດເຊີຍນີ້ ຈະໄດ້ຖືກຈັດຕັ້ງປະຕິບັດ ຫຼັງຈາກມີຜົນສະຫຼຸບການພິການຄັ້ງສຸດທ້າຍ ຂອງອັດຕາຄວາມພິການຕົວຈິງ.

ເຖິງຢ່າງໃດກໍ່ຕາມ, ເມື່ອຜົນກະທົບຂອງອຸປະຕິເຫດຮ້າຍແຮງຂຶ້ນຍ້ອນ ການປະມາດ ຂອງຜູ້ໄດ້ ຮັບປະກັນໄພ ຫຼື ຍ້ອນການປິ່ນປົວຕົວຈິງ, ຈຳນວນເງິນຄ້ຳປະກັນຈະຖືກຄິດໄລ່ຕາມຜົນກະທົບ ທີ່ອຸປະຕິເຫດ ນັ້ນອາດຈະສົ່ງຜົນກະທົບ ຕໍ່ຜູ້ທີ່ມີໃບຢັ້ງຢືນສຸຂະພາບທີ່ດີໄດ້ຮັບການປິ່ນປົວທີ່ສົມ ເຫດສົມຜົນ.

**13.5** ບໍ່ບວກລວມເຂົ້າໃສ່ກັນລະຫວ່າງ ວົງເງິນສິນທົດແທນຍ້ອນ "ເສຍຊີວິດ" ແລະ ວົງເງິນສິນທົດ ແທນຍ້ອນ "ຄວາມພິການ"

ວົງເງິນສິນທົດແທນ ທີ່ໄດ້ຈ່າຍສຳລັບອຸປະຕິເຫດແຕ່ລະຄັ້ງທີ່ກ່ຽວຂ້ອງກັບ ຄວາມພິການຖາວອນ ຈະຖືກຫັກອອກຈາກວົງເງິນຄ້ຳປະກັນທີ່ໄດ້ຮັບການທົດແທນ ໃນກໍລະນີທີ່ເສຍຊີວິດ.

ໃນທຸກກໍລະນີ, ບໍລິສັດປະກັນໄພ ຈະບໍ່ຮັບຜິດຊອບຕໍ່ຜົນທີ່ຕາມມາຂອງການຮ້ອງຟ້ອງ ທີ່ໄດ້ແກ້ ໄຂ ຕາມຂໍ້ກຳນົດສັນຍາປະກັນໄພນີ້ ແລະ ບໍລິສັດປະກັນໄພໄດ້ສະໜອງໃບຮັບເງິນຢ່າງເປັນ ທາງການໃຫ້ແລ້ວ.

**13.6 ຄ່າປິ່ນປົວ:**

ກ. ພື້ນຖານບັນດາຄ່າໃຊ້ຈ່າຍໃນການປິ່ນປົວຈະໄດ້ຮັບການຄຸ້ມກັນ ກໍຕໍ່ເມື່ອມີເອກະສານໃບບິນຕົວຈິງ ຖ້າສະໝັກຊື້ເອົາປະກັນໄພ "ຄ່າປິ່ນປົວ" ບໍລິສັດປະກັນໄພ ຈະຊຳລະຄ່າໃຊ້ຈ່າຍໃນການປິ່ນປົວ, ຢາປິ່ນປົວ, ຄ່າກວດສຸຂະພາບ, ຄ່າຜ່າຕັດແປງຮູບ, ການເບິ່ງແຍງສຸຂະພາບແຂ້ວ ແລະ ການໃສ່ພາກສ່ວນອົງຄະທຽມທີ່ເກີດຂຶ້ນ ຈາກອຸປະຕິເຫດຕາມຫ້ອງຖະໜົນ ທີ່ຄຸ້ມກັນຕາມວົງເງິນຄໍ້າປະກັນທີ່ໄດ້ລະບຸໄວ້ໃນໃບຢັ້ງຢືນປະກັນໄພ.

ຂ. ການຈ່າຍສິນທົດແທນໃນການປິ່ນປົວ:

ວົງເງິນສິນທົດແທນຕ້ອງຊຳລະໃຫ້ຜູ້ໄດ້ຮັບການປະກັນໄພ ຈະຕ້ອງບໍ່ເກີນຄ່າໃຊ້ຈ່າຍຕົວຈິງ ແລະ ບໍ່ເກີນວົງເງິນຄໍ້າປະກັນ.

## ພາກທີ III: ຄວາມຮັບຜິດຊອບຂອງ ຜູ້ຖືສັນຍາປະກັນໄພ ແລະ ບໍລິສັດປະກັນໄພ
## ຂໍ້ມູນກ່ຽວກັບຄວາມສ່ຽງ

**ມາດຕາ 14: ການສະໜອງຂໍ້ມູນ ໃນເວລາເຊັນສັນຍາປະກັນໄພ ແລະ ການຈັດຕັ້ງປະຕິບັດສັນຍາປະກັນໄພ, ການໃຊ້ບໍລິການຂອງຜູ້ຖືສັນຍາປະກັນໄພ:**

**1) ໃນເວລາເຊັນສັນຍາປະກັນໄພ:**

**14.1** ສັນຍາແມ່ນສ້າງຂຶ້ນອີງຕາມຂໍ້ມູນຂອງຜູ້ຖືສັນຍາປະກັນໄພສະໜອງໃຫ້ ແລະ ຄ່າປະກັນໄພແມ່ນຖືກກຳນົດຕາມນັ້ນ. ອີງຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ຂ້າງລຸ່ມ, ຜູ້ຖືສັນຍາປະກັນໄພ ມີໜ້າທີ່ຮັບຜິດຊອບໃນການແຈ້ງຂໍ້ມູນທຸກສະຖານະການຢ່າງຖືກຕ້ອງ ຕາມຄວາມຮູ້ຂອງຜູ້ຖືສັນຍາປະກັນໄພ ແລະ ຂໍ້ມູນທີ່ແຈ້ງໃຫ້ນັ້ນອາດສາມາດຊ່ວຍໃຫ້ບໍລິສັດປະກັນໄພປະເມີນຜົນຕໍ່ບັນດາຄວາມສ່ຽງທີ່ຂຶ້ນກັບຄວາມຮັບຜິດຊອບຂອງບໍລິສັດປະກັນໄພ.

**2) ການຈັດຕັ້ງປະຕິບັດຕົກລົງເຮັດສັນຍາປະກັນໄພ:**

**14.2** ດ້ວຍວິທີການສົ່ງຈົດໝາຍຮັບຮອງ, ຜູ້ຖືສັນຍາປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ມີພັນທະແຈ້ງຂໍ້ມູນຕໍ່ບໍລິສັດປະກັນໄພ ທຸກຂໍ້ມູນທີ່ມີການປ່ຽນແປງທີ່ສົ່ງຜົນສະທ້ອນເຖິງ:

i. ລັກສະນະຂອງລົດທີ່ໄດ້ຮັບການປະກັນໄພຕ້ອງມີລາຍລະອຽດດັ່ງຕໍ່ໄປນີ້:

- ຂະໜາດຂອງກະບອກສູບ

- ໂຕລົດ
- ເສີມພ່ວງເຂົ້າໃນລົດ 2 ລໍ້
- ນໍ້າໜັກທີ່ບັນທຸກໄດ້ ແລະ ນໍ້າໜັກຂອງລົດ (ສໍາລັບລົດເຮັດທຸລະກິດ); ແລະ
- ທຸກລາຍລະອຽດທີ່ມີການປ່ຽນແປງສົ່ງຜົນໃຫ້ມີການປ່ຽນແປງປະສິດທິພາບການທໍາງານຂອງລົດທີ່ໄດ້ຮັບການປະກັນໄພ.

**ii.** ການນໍາໃຊ້ລົດ, ລວມເຖິງໃນກໍລະນີປ່ຽນແປງການນໍາໃຊ້ຊົ່ວຄາວ.

**iii.** ສໍາລັບຜູ້ຂັບຂີ່ໃໝ່: ເພດ, ອາຍຸ, ວັນອອກໃບອະນຸຍາດຂັບຂີ່ຍານພາຫະນະ.

**14.3** ການແຈ້ງຂໍ້ມູນນີ້ ຕ້ອງເຮັດໃຫ້ສໍາເລັດກ່ອນມື້ປ່ຽນແປງ, ຖ້າການປ່ຽນແປງນີ້ ເກີດຂຶ້ນຍ້ອນການກະທໍາຂອງ ຜູ້ຖືສັນຍາປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ແລະ ໃນກໍລະນີອື່ນໆ ໃນໄລຍະເວລາ 8 (ແປດ) ວັນ ນັບແຕ່ເວລາຜູ້ຖືສັນຍາປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພຮູ້ເຖິງການປ່ຽນແປງດັ່ງກ່າວ.

**14.4** ເມື່ອການປ່ຽນແປງນີ້ ເຮັດໃຫ້ເກີດມີຄວາມສ່ຽງເພີ່ມຂຶ້ນ, ຕົວຢ່າງຖ້າການປ່ຽນແປງນັ້ນໄດ້ເກີດຂຶ້ນໃນເວລາທີ່ຕົກລົງເຊັນສັນຍາ ບໍລິສັດປະກັນໄພ ຈະບໍ່ໄດ້ອອກໃບສັນຍາປະກັນໄພໃຫ້ ຫຼື ຈະອອກໃບຢັ້ງຢືນປະກັນໄພ ກໍຕໍ່ເມື່ອນໍາໃຊ້ຄ່າທໍານຽມສູງກວ່າເທົ່ານັ້ນ. ສະນັ້ນ, ການແຈ້ງຂໍ້ມູນແມ່ນຈະໄດ້ປະຕິບັດຕາມມາດຕະການກະທໍາຜິດຕາມການອະທິບາຍດັ່ງຕໍ່ໄປນີ້ ແລະ ຕາມຂໍ້ກໍານົດຂອງກົດໝາຍ ບໍລິສັດປະກັນໄພ ອາດຈະຍົກເລີກສັນຍາ ໂດຍການແຈ້ງລ່ວງໜ້າ 10 (ສິບ) ວັນ ຫຼື ສະເໜີນໍາໃຊ້ຄ່າທໍານຽມໃໝ່.

ໃນກໍລະນີຜູ້ຖືສັນຍາປະກັນໄພ ບໍ່ເຫັນດີກັບການນໍາໃຊ້ຄ່າທໍານຽມໃໝ່ ແມ່ນບໍລິສັດປະກັນໄພອາດຈະຍົກເລີກສັນຍາດ້ວຍວິທີການແຈ້ງລ່ວງໜ້າກ່ອນ 10 (ສິບ) ວັນ.

**3)** **ມາດຕະການຕໍ່ຜູ້ກະທໍາຜິດ:**

**14.5** ການກະທໍາທີ່ເປັນການປິດບັງເຊື່ອງອໍາ, ການແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງ, ບໍ່ຄົບຖ້ວນ, ແຈ້ງລາຍລະອຽດບໍ່ຖືກຕ້ອງ ຫຼື ການແຈ້ງຂໍ້ມູນບໍ່ແນ່ນອນເຖິງລາຍລະອຽດຂໍ້ມູນປົກຍ່ອຍ ຫຼື ການເພີ່ມຄວາມສ່ຽງທີ່ກ່າວມາຂ້າງເທິງແມ່ນ ຈະຖືກລົງໂທດເຖິງແມ່ນວ່າການກະທໍາເຫຼົ່ານີ້ ບໍ່ສົ່ງຜົນກະທົບໂດຍກົງ ຫຼື ໂດຍທາງອ້ອມ ກໍໃຫ້ເກີດອຸປະຕິເຫດ, ໃນກໍລະນີຕໍ່ໄປນີ້:

ກ. ໂດຍການຍົກເລີກສັນຍາ ໃນກໍລະນີຜູ້ຖືສັນຍາປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ຫຼື ຕາງໜ້າຂອງເຂົາເຈົ້າບໍ່ສັດຊື່.

ຂ. ດ້ວຍວິທີການຫຼຸດວົງເງິນທົດແທນຄວາມເສຍຫາຍ ຕາມອັດຕາສ່ວນລະຫວ່າງຄ່າທຳນຽມປະກັນໄພທີ່ໄດ້ຊຳລະແລ້ວ ຖ້າທຽບໃສ່ຄ່າທຳນຽມຕ້ອງຊຳລະ, ຖ້າວ່າຂໍ້ມູນທີ່ໄດ້ແຈ້ງບັນດາຄວາມສ່ຽງດັ່ງກ່າວຖືກຕ້ອງ ແລະ ຄົບຖ້ວນ ໃນກໍລະນີນີ້ ຜູ້ຖືສັນຍາປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພຕ້ອງຢັ້ງຢືນໄດ້ວ່າ: ພວກເຂົາໄດ້ມີການລາຍງານກ່ຽວກັບຄວາມສ່ຽງແລ້ວ ແຕ່ການລາຍງານກ່ຽວກັບຄວາມສ່ຽງເຂົາແມ່ນບໍ່ຖືກຕ້ອງ ແລະ ຄົບຖ້ວນ.

ອັດຕາສ່ວນທີ່ຖືກນຳໃຊ້ເປັນພື້ນຖານໃນສ່ວນຫຼຸດນີ້ ແມ່ນຂຶ້ນກັບລາຍລະອຽດຂອງແຕ່ລະກໍລະນີລາຍລະອຽດຕົວຈິງ, ແມ່ນອັດຕາສ່ວນທີ່ນຳໃຊ້ເຂົ້າໃນເວລາຕົກລົງເຫັນດີເຊັນສັນຍາ ຫຼື ເຂົ້າໃນມື້ທີ່ເກີດມີຄວາມສ່ຽງເພີ່ມຂຶ້ນ ຫຼື ວັນສຸດທ້າຍກ່ອນມື້ເກີດມີຄວາມເສຍຫາຍຂຶ້ນ ຖ້າບໍ່ສາມາດລະບຸໄດ້ວັນດັ່ງກ່າວ.

**4) ການເຮັດປະກັນໄພນຳບໍລິສັດອື່ນຊ້ຳກັນ:**

**14.6** ຖ້າຄວາມສ່ຽງນີ້ໄດ້ຮັບປະກັນໄພຕາມການຕົກລົງເຫັນດີໃນສັນຍາສະບັບນີ້ ແຕ່ໄດ້ຮັບການຄຸ້ມກັນຕາມສັນຍາປະກັນໄພອື່ນຊ້ຳກັນແມ່ນ ຜູ້ຖືສັນຍາປະກັນໄພ ມີໜ້າທີ່ແຈ້ງຕໍ່ບໍລິສັດປະກັນໄພດ້ວຍເອກະສານ.

**14.7** ໃນກໍລະນີເກີດອຸປະຕິເຫດ, ບັນດາຂໍ້ກຳນົດໃນຂໍ້ 18.21 ຈະໄດ້ຖືກນຳໃຊ້.

## ຄ່າທຳນຽມປະກັນໄພ

**ມາດຕາ 15: ຜູ້ຖືສັນຍາປະກັນໄພຊຳລະຄ່າທຳນຽມປະກັນໄພ - ຜົນກະທົບຂອງການຊຳລະຄ່າທຳນຽມປະກັນໄພຊັກຊ້າ, ອາກອນ.**

**15.1.** ຜູ້ຖືສັນຍາປະກັນໄພ ຈະຕ້ອງຊຳລະຄ່າທຳນຽມປະກັນໄພ ໃຫ້ບໍລິສັດປະກັນໄພເປັນ ໜຶ່ງຄັ້ງ ຫຼື ຫຼາຍຄັ້ງ ຕາມທີ່ໄດ້ຕົກລົງໄວ້ໃນສັນຍາປະກັນໄພ ແລະ/ຫຼື ໃບຢັ້ງຢືນປະກັນໄພ. ໃນກໍລະນີບໍ່ລະບຸເວລາລະອຽດຈະແຈ້ງໃນສັນຍາປະກັນໄພ ແລະ/ຫຼື ໃບຢັ້ງຢືນປະກັນໄພ, ໄລຍະເວລາທີ່ມອບຄ່າທຳນຽມປະກັນໄພຈະຖືວ່າແມ່ນ ໄລຍະເລີ່ມຕົ້ນຜົນສັກສິດຂອງສັນຍາປະກັນໄພ

**15.2.** ໃນທຸກກໍລະນີ, ຖ້າເກີນກຳນົດຊຳລະຄ່າທຳນຽມປະກັນໄພ ຕາມແຕ່ລະໄລຍະເວລາທີ່ໄດ້ກຳນົດໄວ້, ຜູ້ຖືສັນຍາປະກັນໄພ ບໍ່ຈ່າຍຄ່າທຳນຽມປະກັນໄພ ຫຼື ຊຳລະຄ່າທຳນຽມປະກັນໄພບໍ່ຄົບຖ້ວນໃຫ້ແກ່ບໍລິສັດປະກັນໄພ ແລະ ທັງສອງຝ່າຍບໍ່ມີຂໍ້ຕົກລົງເປັນເອກະສານລາຍລັກອັກສອນ

ກ່ຽວກັບການເລື່ອນເວລາໃນການຊຳລະຄ່າທຳນຽມແມ່ນ ສັນຍາຈະຖືກຍົກເລີກນຳໃຊ້ ຫຼັງມື້ສຸດທ້າຍຂອງໄລຍະທີ່ກຳນົດການຈ່າຍຄ່າທຳນຽມ.

**15.3.** ໃນກໍລະນີທີ່ສັນຍາປະກັນໄພຍັງມີຜົນບັງຄັບໃຊ້ ແລະ ຄ່າທຳນຽມບໍ່ທັນຮອດກຳນົດຊຳລະຄ່າທຳນຽມແຕ່ເກີດມີຄວາມເສຍຫາຍຂຶ້ນ ແມ່ນຜູ້ຖືສັນຍາປະກັນໄພ ຈະຕ້ອງຮັບຜິດຊອບຈ່າຍຄ່າທຳນຽມທີ່ຍັງເຫຼືອທັງໝົດໃຫ້ ບໍລິສັດປະກັນໄພ ພາຍໃນ 15 (ສິບຫ້າ) ວັນ ນັບແຕ່ມື້ເກີດມີຄວາມເສຍຫາຍ ກ່ອນໜ້າທີ່ ບໍລິສັດປະກັນໄພ ຈະພິຈາລະນາຈ່າຍຄ່າທົດແທນ.

**15.4.** ກໍລະນີສັນຍາປະກັນໄພໄດ້ສິ້ນສຸດຜົນບັງຄັບໃຊ້ຕາມຂໍ້ກຳນົດທີ່ລະບຸຂໍ້ 15.2 ຂອງມາດຕານີ້ ແຕ່ຈາກນັ້ນ ຜູ້ຖືສັນຍາປະກັນໄພ ຈ່າຍຄ່າທຳນຽມປະກັນໄພ ແລະ ຮຽກຮ້ອງໃຫ້ສືບຕໍ່ປະກັນໄພໃຫ້ແກ່ຍານພາຫະນະຂອງຕົນ, ສັນຍາປະກັນໄພຈະຄືນສະຖານະຜົນບັງຄັບໃຊ້ແບບອັດຕະໂນມັດນັບແຕ່ເວລາທີ່ລູກຄ້າຈ່າຍຄ່າທຳນຽມ. ບໍລິສັດປະກັນໄພ ຈະບໍ່ມີຄວາມຮັບຜິດຊອບໃນການຈ່າຍທົດແທນສຳລັບການສູນເສຍທີ່ເກີດຂຶ້ນ ນັບແຕ່ມື້ທີ່ສັນຍາປະກັນໄພທີ່ອະນຸມັດໄດ້ໝົດອາຍຸໂດຍອັດຕະໂນມັດ ກ່ອນມື້ທີ່ຜູ້ຖືສັນຍາປະກັນໄພຈ່າຍຄ່າທຳນຽມຢ່າງຄົບຖ້ວນຕາມສັນຍາ ແລະ ຮຽກຮ້ອງໃຫ້ຕໍ່ອາຍຸສັນຍາປະກັນໄພ.

**ມາດຕາ 16: ການດັດແກ້ຄ່າທຳນຽມປະກັນໄພ:**

**16.1** ຖ້າບໍລິສັດປະກັນໄພປັບອັດຕາສ່ວນຄ່າທຳນຽມປະກັນໄພ ທີ່ນຳໃຊ້ກັບບັນດາຄວາມສ່ຽງທີ່ໄດ້ຮັບປະກັນໄພຕາມສັນຍາສະບັບນີ້, ຄ່າທຳນຽມຈະຖືກປັບປ່ຽນຕາມອັດຕາສ່ວນດຽວກັນ ໃນມື້ທີ່ຊຳລະໂດຍອີງຕາມການດັດແກ້ນີ້.

**16.2** ໃນກໍລະນີມີການເພີ່ມຄ່າທຳນຽມ, ຜູ້ຖືສັນຍາປະກັນໄພມີສິດຍົກເລີກສັນຍາປະກັນໄພພາຍໃນໄລຍະເວລາ 15 (ສິບຫ້າ) ວັນ ຫຼັງຈາກມື້ທີທີ່ຜູ້ຖືສັນຍາປະກັນໄພໄດ້ຮັບຮູ້ເຖິງການປັບເພີ່ມຄ່າທຳນຽມຂຶ້ນ.

**16.3** ການຕັດສິນໃຈຍົກເລີກຂ້າງເທິງນີ້ ຈະມີຜົນບັງຄັບໃຊ້ພາຍໃນໜຶ່ງເດືອນ ນັບແຕ່ມື້ໄດ້ຮັບໜັງສືຄໍ້າປະກັນ ຫຼື ຫຼັງຈາກມີແຈ້ງການໄດ້ຮັບຈົດໝາຍ; ຫຼັງຈາກນັ້ນ ຜູ້ຖືສັນຍາປະກັນໄພມີພັນທະທີ່ຈະຈ່າຍສ່ວນໜຶ່ງຂອງຄ່າທຳນຽມປະກັນໄພທີ່ ໄດ້ຄິດໄລ່ຕາມລະດັບຄ່າທຳນຽມປະກັນໄພທີ່ນຳໃຊ້ກ່ອນໜ້ານັ້ນໂດຍອີງໃສ່ໄລຍະເວລາຈາກ ວັນທີຊຳລະຄັ້ງລ່າສຸດ ແລະ ມື້ທີ່ມີຜົນບັງຄັບໃຊ້ໃນການຍົກເລີກ.

## ອຸປະຕິເຫດ

**ມາດຕາ 17:** ການແຈ້ງອຸປະຕິເຫດຂອງຜູ້ຖືສັນຍາປະກັນໄພ:

**17.1** ໃນກໍລະນີເກີດອຸປະຕິເຫດ, ຜູ້ຖືສັນຍາປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພມີພັນທະ:

ກ. ແຈ້ງຂໍ້ມູນການເກີດອຸປະຕິເຫດໃຫ້ ບໍລິສັດປະກັນໄພຮັບຊາບທັນທີ ເມື່ອຜູ້ໄດ້ຮັບການປະກັນໄພປະສົບກັບອຸປະຕິເຫດ ຊ້າສຸດບໍ່ເກີນ 5 (ຫ້າ) ວັນ ຫຼັງຈາກເກີດອຸປະຕິເຫດ, ຍົກເວັ້ນກໍລະນີສຸດວິໄສ ໃຫ້ບຸລິມະສິດແກ່ການສົ່ງໜັງສືແຈ້ງອຸປະຕິເຫດ ທີ່ເປັນເອກະສານລາຍລັກອັກສອນ ຫຼື ທາງປາກ ແລະ ໄດ້ຮັບການຢືນຢັນຈາກ ບໍລິສັດປະກັນໄພ. ຖ້າບໍ່ແຈ້ງຂໍ້ມູນແມ່ນຜູ້ໄດ້ຮັບປະກັນໄພຈະໝົດສິດໃນການຮຽກຮ້ອງ.

ໃນກໍລະນີມີການລັກ, ຕ້ອງແຈ້ງໃຫ້ ບໍລິສັດປະກັນໄພຮັບຊາບພາຍໃນເວລາ 36 (ສາມສິບຫົກ) ຊົ່ວໂມງ ພາຍຫຼັງມີເຫດການລັກເກີດຂຶ້ນ.

ຂ. ຕ້ອງສົ່ງຕໍ່ປຶ້ມບັນທຶກການໄກ່ເກ່ຍທີ່ໄດ້ຮັບການຢັ້ງຢືນ ພ້ອມກັບແບບຟອມໃບຮ້ອງຂໍສິນທົດແທນ ຫຼື ໃນກໍລະນີທີ່ບໍ່ສາມາດສົ່ງປຶ້ມບັນທຶກ, ໃບຮ້ອງຂໍສິນທົດແທນ ແມ່ນຫຼັງຈາກນັ້ນຕ້ອງໄດ້ສົ່ງໃບຮ້ອງຂໍສິນທົດແທນໃຫ້ໄວເທົ່າທີ່ຈະໄວໄດ້, ໂດຍແຈ້ງຂໍ້ມູນຄຸນລັກສະນະ ແລະ ສະຖານະການຂອງການເກີດອຸປະຕິເຫດ, ບັນດາສາເຫດສົມມຸດຕິຖານ ຫຼື ສິ່ງທີ່ຕົນຮູ້ ແລະ ສິ່ງຈຳເປັນຕ້ອງໄດ້ສະໜອງຂໍ້ມູນກ່ຽວກັບ ຊື່ ແລະ ທີ່ຢູ່ຂອງຜູ້ຂັບຂີ່ບ່ອນສະຖານທີ່ເກີດອຸປະຕິເຫດ, ຜູ້ບາດເຈັບ ແລະ ພະຍານ, ຖ້າເປັນໄປໄດ້.

ຄ. ສົ່ງຕໍ່ໃຫ້ບໍລິສັດປະກັນໄພ, ເມື່ອໄດ້ຮັບແຈ້ງການ, ຈົດໝາຍ, ຈົດໝາຍຮຽກ, ໃບນັດໝາຍ, ການກະທຳທີ່ເປັນເອກະລັກພິເສດ ແລະ ບັນດາເອກະສານກ່ຽວກັບຂັ້ນຕອນດຳເນີນການອາດຈະໄດ້ນຳສົ່ງ, ມອບ, ໃຫ້ແກ່ ຜູ້ຖືສັນຍາປະກັນໄພ ຫຼື ຜູ້ຕາງໜ້າຂອງຜູ້ຖືສັນຍາປະກັນໄພທີ່ກ່ຽວຂ້ອງກັບອຸປະຕິເຫດ ຕ້ອງໄດ້ປະຕິບັດພັນທະໜ້າທີ່ຂອງຕົນຕາມສັນຍາປະກັນໄພທີ່ໄດ້ຕົກລົງກັນ.

ບໍ່ໄດ້ເຂົ້າຮ່ວມໃນການເຈລະຈາ, ຍອມຮັບ ຫຼື ປະຕິເສດຂໍ້ຮຽກຮ້ອງໃດໆ ໂດຍບໍ່ໄດ້ຮັບການເຫັນດີລ່ວງໜ້າກ່ອນທີ່ຈະໄດ້ມີເອກະສານຈາກ ບໍລິສັດປະກັນໄພ. ບໍລິສັດປະກັນໄພມີສິດຕັດສິນການດຳເນີນການແກ້ໄຂທັງໝົດ, ການປົກປ້ອງສິດ ແລະ/ຫຼື ແກ້ໄຂທຸກຄຳຮ້ອງຟ້ອງຮ້ອງທຸກໃດໆ.

ງ. ໃນກໍລະນີເກີດການສູນເສຍໃຫ້ແກ່ລົດທີ່ໄດ້ຮັບການປະກັນໄພ (ເງື່ອນໄຂການຄຸ້ມກັນຂໍ້ ຄ ຫາຂໍ້ ຊ) ຕ້ອງແຈ້ງໃຫ້ບໍລິສັດປະກັນໄພ ເຖິງສະຖານທີ່ບ່ອນທີ່ເກີດຄວາມເສຍຫາຍດັ່ງກ່າວນັ້ນ; ບໍ່ດຳເນີນການ ຫຼື ຈັດຕັ້ງປະຕິບັດການສ້ອມແປງກ່ອນທີ່ຈະໄດ້ຮັບການເຫັນດີຈາກ ບໍລິສັດປະກັນໄພ. ຂໍ້

ຮຽກຮ້ອງນີ້ຈະບໍ່ມີຜົນບັງຄັບໃຊ້ອີກຕໍ່ໄປ ຖ້າບໍລິສັດປະກັນໄພ ບໍ່ມີຄຳເຫັນ ພາຍໃນ 15 (ສິບຫ້າ) ວັນນັບຈາກມື້ທີ່ໄດ້ຮັບແຈ້ງການ ການເກີດອຸປະຕິເຫດ, ເຖິງຢ່າງໃດກໍ່ຕາມ ຫຼັງຈາກນັ້ນ ຜູ້ໄດ້ຮັບການປະກັນໄພ ຕ້ອງມີໜ້າທີ່ໃນການສົ່ງໃບບິນເປັນຫຼັກຖານຢັ້ງຢືນເຖິງ ຄ່າໃຊ້ຈ່າຍທີ່ເກີດຂຶ້ນໃຫ້ບໍລິສັດປະກັນໄພ.

ຈ. ໃນກໍລະນີລົດໄດ້ຮັບການປະກັນໄພເກີດອຸປະຕິເຫດໃນຂະນະທີ່ກຳລັງຖືກຂົນສົ່ງ, ຜູ້ໄດ້ຮັບການປະກັນໄພ ຕ້ອງແຈ້ງໃຫ້ບໍລິສັດຂົນສົ່ງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ກໍ່ຄືບໍລິສັດປະກັນໄພດ້ວຍເອກະສານທີ່ເປັນລາຍລັກອັກສອນພາຍໃນ 3 (ສາມ) ວັນ ຈຸດປະສົງເພື່ອທຳການຮຽກຮ້ອງສິນທົດແທນຄືນ ຈາກພາກສ່ວນທີ່ກ່ຽວຂ້ອງ.

ສ. ໃນກໍລະນີລົດທີ່ໄດ້ຮັບການປະກັນໄພຖືກລັກ, ຕ້ອງແຈ້ງໃຫ້ຕຳຫຼວດທ້ອງຖິ່ນ ແລະ ອົງການທີ່ກ່ຽວຂ້ອງຜູ້ທີ່ອອກໃບຢັ້ງຢືນການລົງທະບຽນ. ໃນກໍລະນີຊອກເຫັນລົດຄືນ, ຜູ້ໄດ້ຮັບການປະກັນໄພຕ້ອງແຈ້ງໃຫ້ບໍລິສັດປະກັນໄພຮັບຊາບພາຍໃນ 8 (ແປດ) ວັນ ແລະ ຖ້າບໍລິສັດປະກັນໄພຮຽກຮ້ອງ, ຜູ້ໄດ້ຮັບການປະກັນໄພ ຕ້ອງຍື່ນສຳນວນຄຳຮ້ອງທຸກຕໍ່ສຳນັກງານໄອຍະການ.

**17.2** ຖ້າຜູ້ຖືສັນຍາປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ຫາກບໍ່ປະຕິບັດຕາມພັນທະໜ້າທີ່ ທີ່ໄດ້ກຳນົດໄວ້ໃນ ຂໍ້ 17.1 (ກ) ເຖິງ ຂໍ້ 17.1 (ສ), ຍົກເວັ້ນກໍລະນີເຫດບັງເອີນ ຫຼື ເຫດສຸດວິໄສ, ບໍລິສັດປະກັນໄພ ມີສິດທີ່ຈະຫຼຸດຈຳນວນເງິນຄ່າສິນທົດແທນຕາມ ຄວາມເສຍຫາຍທີ່ເກີດຈາກການບໍ່ປະຕິບັດຕາມພັນທະໜ້າທີ່ດັ່ງກ່າວ.

**17.3** ເມື່ອອຸປະຕິເຫດເຮັດໃຫ້ ຜູ້ຖືສັນຍາປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພເສຍຊີວິດ, ເມື່ອຮູ້ຂໍ້ມູນການເກີດອຸປະຕິເຫດ, ຜູ້ຮຽກຮ້ອງຄ່າສິນທົດແທນທີ່ຖືກຕ້ອງຕາມກົດໝາຍຂອງ ຜູ້ຖືສັນຍາປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ຕ້ອງໄດ້ແຈ້ງການໃຫ້ ບໍລິສັດປະກັນໄພຮັບຮູ້ໃນໄລຍະເວລາທີ່ກຳນົດ ແລະ ຕາມແບບຟອມທີ່ໄດ້ລະບຸໄວ້ໃນຂໍ້ 17.1 (ກ) ແລະ ຕ້ອງປະຕິບັດຕາມພັນທະໜ້າທີ່ ທີ່ໄດ້ກ່າວມາຂ້າງເທິງ ແລະ ບໍລິສັດປະກັນໄພ ມີສິດໃນການຫຼຸດຈຳນວນເງິນຄ່າສິນທົດແທນທີ່ສອດຄ້ອງກັບຄວາມເສຍຫາຍທີ່ເກີດມາຈາກ ການບໍ່ປະຕິບັດຕາມພັນທະໜ້າທີ່ດັ່ງກ່າວ, ຍົກເວັ້ນກໍລະນີເຫດບັງເອີນ ຫຼື ເຫດສຸດວິໄສ.

**17.4** ຖ້າຜູ້ຖືສັນຍາປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດຂອງພວກເຂົາສະໜອງຂໍ້ມູນຜິດກັບຄວາມເປັນຈິງ, ສາເຫດ, ເຫດການ ແລະ ຜົນສະທ້ອນຂອງການເກີດອຸປະຕິເຫດ, ບຸກຄົນເຫຼົ່ານີ້ຈະໝົດສິດໃນການຮຽກຮ້ອງເອົາສິນທົດແທນສຳລັບ ອຸປະຕິເຫດນີ້.

ມາດຕາ 18: ການແກ້ໄຂອຸປະຕິເຫດ:

1) ບັນດາລະບຽບການທີ່ນຳໃຊ້ໃຫ້ແກ່ປະກັນໄພທາງດ້ານຄວາມຮັບຜິດຊອບທາງແພ່ງ:

18.1 ໃນກໍລະນີທີ່ມີຄຳຖາມກ່ຽວກັບ ຄວາມຮັບຜິດຊອບທີ່ໄດ້ຮັບການປະກັນໄພ ຕາມການຕົກລົງໃນສັນຍາສະບັບນີ້, ໃນຂອບເຂດຂອງການຕົກລົງໃນສັນຍາສະບັບນີ້, ບໍລິສັດປະກັນໄພ ມີສິດດຳເນີນຂັ້ນຕອນເອກະສານດັ່ງຕໍ່ໄປນີ້:

- ສຳລັບການລະເມີດດ້ານການບໍລິຫານ: ສິດເລືອກເອົາການປົກປ້ອງສິດເພື່ອຊ່ວຍເຫຼືອ ຜູ້ໄດ້ຮັບການປະກັນໄພ ໃນກໍລະນີມີການຟ້ອງຮ້ອງ ຫຼື ດຳເນີນທຸກວິທີທາງເພື່ອໃຊ້ວິທີແກ້ໄຂໃດໆຕາມກົດໝາຍ.

- ສຳລັບຄວາມຮັບຜິດຊອບທາງອາຍາ: ດ້ວຍຄວາມເຫັນດີກ່ອນນັ້ນຈາກ ຜູ້ໄດ້ຮັບການປະກັນໄພ, ສິດທີ່ຈະເລືອກດຳເນີນການປົກປ້ອງສິດທາງອາຍາ ຫຼື ການປົກປ້ອງສິດຮ່ວມກັນໃຫ້ແກ່ຜູ້ໄດ້ຮັບການປະກັນໄພ ເມື່ອຜູ້ຖືກເຄາະຮ້າຍບໍ່ຮັບຜິດຊອບຕໍ່ອຸປະຕິເຫດ. ເຖິງຢ່າງໃດກໍ່ຕາມ, ຖ້າບໍ່ໄດ້ຮັບຄວາມເຫັນດີຈາກ ຜູ້ໄດ້ຮັບການປະກັນໄພ, ບໍລິສັດປະກັນໄພ ຍັງສາມາດດຳເນີນການປົກປ້ອງສິດ ທາງແພ່ງຂອງ ຜູ້ໄດ້ຮັບການປະກັນໄພ.

ບໍລິສັດປະກັນໄພອາດສາມາດຟ້ອງຮ້ອງໃນນາມຂອງຜູ້ໄດ້ຮັບການປະກັນໄພ, ລວມທັງການຮ້ອງຟ້ອງຕໍ່ສານສູງສຸດ ເມື່ອຜູ້ໄດ້ຮັບການປະກັນໄພບໍ່ມີຄວາມຮັບຜິດຊອບທາງອາຍາຕື່ມ; ອີກດ້ານໜຶ່ງ, ບໍລິສັດປະກັນໄພ ຕ້ອງໄດ້ຮັບການອະນຸມັດຈາກຜູ້ໄດ້ຮັບການປະກັນໄພເສຍກ່ອນ.

18.2 ມີພຽງແຕ່ບໍລິສັດປະກັນໄພເທົ່ານັ້ນ, ໃນຂອບເຂດການຄ້ຳປະກັນນີ້, ມີສິດທີ່ຈະຕົກລົງກັບ ຜູ້ທີ່ໄດ້ຮັບບາດເຈັບ ຫຼື ຜູ້ທີ່ຕາງໜ້າແຕ່ລະຝ່າຍທີ່ມີສິດຕົກລົງ.

18.3 ການຍອມຮັບຄວາມຮັບຜິດຊອບຕໍ່ເຫດການໃດກໍ່ຕາມ, ບໍ່ວ່າທຸລະກຳໃດໆຕໍ່ບຸກຄົນອື່ນ ທີ່ບໍ່ແມ່ນບໍລິສັດປະກັນໄພ ຈະບໍ່ຜູກມັດໃຫ້ ບໍລິສັດປະກັນໄພ ປະຕິບັດ. ບັນດາການຍອມຮັບຕໍ່ຄວາມຮັບຜິດຊອບ, ການຍອມຮັບບັນດາເອກະສານທີ່ກ່ຽວຂ້ອງກັບຄະດີຕ່າງໆ, ຖ້າໄດ້ຮັບການຈັດຕັ້ງປະຕິບັດ ແມ່ນໃຫ້ຮັບຮູ້ວ່ານັ້ນຄືການຊ່ວຍເຫຼືອໃຫ້ແກ່ ຜູ້ຖືກເຄາະຮ້າຍ ຕາມຮູບແບບທີ່ທີ່ທຸກຄົນມີພັນທະທາງດ້ານກົດໝາຍ ຫຼື ທາງສິນທຳທີ່ຕ້ອງປະຕິບັດ.

2) ບັນດາລະບຽບການທີ່ນຳໃຊ້ໃຫ້ແກ່ ການສູນເສຍຕໍ່ລົດທີ່ໄດ້ຮັບການປະກັນໄພ:

ກ. ການປະເມີນຄວາມເສຍຫາຍ, ການຕີລາຄາຂອງຜູ້ຊ່ຽວຊານ:

**18.4** ຖ້າວ່າທັງສອງຝ່າຍບໍ່ເຫັນດີເປັນເອກະພາບກັນ ໃນການກຳນົດລະດັບຄວາມເສຍຫາຍ ແມ່ນຕ້ອງໄດ້ຮ້ອງຂໍໃຫ້ມີການປະເມີນຄວາມເສຍຫາຍ ຂຶ້ນກັບສິດທິຂອງແຕ່ລະຝ່າຍ. ແຕ່ລະຝ່າຍເລືອກຜູ້ປະເມີນຜົນຂອງຕົນເອງ; ຖ້າຜູ້ປະເມີນທັງສອງຝ່າຍທີ່ຖືກແຕ່ງຕັ້ງບໍ່ເຫັນດີເປັນເອກະພາບກັນ, ແມ່ນອາດຕ້ອງເພີ່ມຜູ້ປະເມີນທີ່ສາມ, ຜູ້ປະເມີນທັງສາມເຮັດວຽກຮ່ວມກັນບົນພື້ນຖານການລົງຄະແນນສຽງສ່ວນຫຼາຍ.

**18.5** ຖ້າໜຶ່ງໃນສອງຝ່າຍບໍ່ສາມາດແຕ່ງຕັ້ງຜູ້ປະເມີນຜົນ ຫຼື ຜູ້ປະເມີນສອງຄົນບໍ່ເຫັນດີເອກະພາບກ່ຽວກັບລະດັບການສູນເສຍ ຫຼື ການຄັດເລືອກຜູ້ປະເມີນທີ່ສາມ ຍັງບໍ່ສາມາດເອກະພາບກັນໄດ້, ປະທານສານປະຊາຊົນຈະແຕ່ງຕັ້ງຜູ້ປະເມີນຜົນ ເພື່ອແກ້ໄຂວຽກງານອຸປະຕິເຫດ. ການແຕ່ງຕັ້ງດັ່ງກ່າວນີ້ ຈະເກີດຂຶ້ນຕາມການສະເໜີຂອງຝ່າຍທີ່ເປັນເຈົ້າການທີ່ສຸດ.

**18.6** ແຕ່ລະຝ່າຍຕ້ອງຮັບຜິດຊອບການຊຳລະຄ່າໃຊ້ຈ່າຍໃຫ້ແກ່ຜູ້ປະເມີນຜົນຂອງຕົນ ແລະ ຕ້ອງຈ່າຍຝ່າຍລະເຄິ່ງໜຶ່ງສຳລັບລາຍຈ່າຍຕ້ອງຈ່າຍ ໃຫ້ຜູ້ປະເມີນຜົນທີ່ສາມຖ້າມີ.

**ຂ.** ການກຳນົດວົງເງິນສິນທົດແທນ:

**18.7** ຖ້າມັນບໍ່ຂັດກັບບັນດາຂໍ້ກຳນົດແຕ່ຂໍ້ 14.1 ເຖິງ ຂໍ້ 14.7 ກ່ຽວກັບການແຈ້ງສະໜອງຂໍ້ມູນຂອງຜູ້ຖືສັນຍາປະກັນໄພ ໃນໄລຍະເວລາທີ່ປະເມີນຄວາມສ່ຽງ ແລະ ໃນຂັ້ນຕອນການຕົກລົງປະຕິບັດສັນຍາ, ບໍລິສັດປະກັນໄພ ຈະຈ່າຍຈຳນວນເງິນສິນທົດແທນດັ່ງຕໍ່ໄປນີ້:

- ເມື່ອລົດທີ່ໄດ້ຮັບການປະກັນໄພຖືກທຳລາຍທັງໝົດ ຫຼື ບໍ່ສາມາດໃຊ້ງານໄດ້ ຫຼື ຖືກລັກ: ລວມມູນຄ່າເປັນເງິນຂອງລົດ ໃນວັນທີເກີດອຸປະຕິເຫດ, ອາດສາມາດຫັກມູນຄ່າຕາມຄວາມເໝາະສົມບົນພື້ນຖານຂອງຊັບສິນທີ່ກູ້ຄືນມາໄດ້ ແລະ/ຫຼື ຄ່າໃຊ້ຈ່າຍໃດໆ ທີ່ເກີດຂຶ້ນໃນການຊອກຫາ ຫຼື ເກັບຄືນຊັບສິນທີ່ຖືກລັກຄືນມາ;
- ເມື່ອມີການສູນເສຍບາງສ່ວນເກີດຂຶ້ນ: ຄ່າໃຊ້ຈ່າຍໃນການສ້ອມແປງ ຫຼື ການປ່ຽນຖ່າຍບາງສ່ວນທີ່ມີການເປ່ເພ ພາຍໃນຂອບເຂດມູນຄ່າຄິດໄລ່ເປັນເງິນສົດຂອງລົດທີ່ໄດ້ຮັບປະກັນໄພນັ້ນ ໃນມື້ທີເກີດອຸປະຕິເຫດ.

**18.8** ຈຳນວນເງິນສິນທົດແທນນີ້ ແມ່ນອີງໃສ່ຜົນຂອງການປະເມີນຜົນການສູນເສຍ ທີ່ໄດ້ລະບຸໄວ້ໃນເງື່ອນໄຂ ຂໍ້ 18.4 ເຖິງຂໍ້ 18.6. ໃນກໍລະນີໃດກໍ່ຕາມ, ຈຳນວນເງິນສິນທົດແທນນີ້ແມ່ນ ບໍ່ສູງກວ່າ ຈຳນວນເງິນຄ້ຳປະກັນທີ່ໄດ້ກຳນົດໄວ້ໃນໃບຢັ້ງຢືນປະກັນໄພ.

**18.9** ຖ້າຫາກວ່າວົງເງິນຄ້ຳປະກັນ ຫາກຕ່ຳກວ່າລາຄາທ້ອງຕະຫຼາດຂອງລົດທີ່ໄດ້ຮັບການປະກັນໄພ ແມ່ນຜູ້ໄດ້ຮັບການປະກັນໄພຈະບໍ່ໄດ້ຮັບການທົດແທນຄ່າເສຍຫາຍທັງໝົດ ທີ່ເກີດຂຶ້ນກັບລົດທີ່ໄດ້ຮັບການປະກັນໄພ ໃນກໍລະນີໂຊກບໍ່ດີມີອຸປະຕິເຫດເກີດຂຶ້ນ. ຈຳນວນເງິນສິນທົດແທນສູງສຸດຂອງບໍລິສັດປະກັນໄພຈະຖືກກຳນົດຕາມສູດຄິດໄລ່ດັ່ງຕໍ່ໄປນີ້:

$$\text{ຈຳນວນເງິນສິນທົດແທນສູງສຸດຂອງບໍລິສັດປະກັນໄພ} = \frac{\text{ວົງເງິນຄຸ້ມກັນ}}{\text{ລາຄາຕາມທ້ອງຕະຫຼາດ}} \times \text{ມູນຄ່າເສຍຫາຍ/ສູນເສຍ}$$

**18.10** ລະດັບຄວາມຮັບຜິດຊອບເອງທັງໝົດທີ່ລະບຸໄວ້ໃນໃບຢັ້ງຢືນການປະກັນໄພ, ຖ້າມີ ຈະຖືກຫັກອອກຈາກຈຳນວນເງິນສິນທົດແທນສຸດທ້າຍ.

**ຄ.** ການຊຳລະເງິນສິນທົດແທນ:

**18.11** ຜູ້ຖືສັນຍາປະກັນໄພ, ເຈົ້າຂອງລົດທີ່ໄດ້ຮັບການປະກັນໄພ ຫຼື ຜູ້ທີ່ໄດ້ຮັບການເຫັນດີໃຫ້ຕາງໜ້າຂອງພວກເຂົາ ຈະໄດ້ຮັບເງິນສິນທົດແທນໂດຍກົງຈາກ ບໍລິສັດປະກັນໄພ ເມື່ອສະເໜີແຈ້ງບັນດາໃບບິນຮັບເງິນ.

**3) ບັນດາລະບຽບການທີ່ນຳໃຊ້ຕໍ່ ເງື່ອນໄຂປະກັນໄພ "ການປົກປ້ອງສິດ ແລະ ການຮຽກຮ້ອງສິນທົດແທນຄືນ":**

**ກ.** ການປົກປ້ອງສິດ:

**18.12** ບໍລິສັດປະກັນໄພ ມີໜ້າທີ່ຜິດຊອບໃນການປົກປ້ອງສິດໃຫ້ແກ່ ຜູ້ໄດ້ຮັບການປະກັນໄພ ໃນສານອາຍາ ຫຼື ອົງການທີ່ຮັບຜິດຊອບໃນການຍຶດໃບຂັບຂີ່ຍານພາຫະນະທີ່ຜູ້ໄດ້ຮັບການປະກັນໄພອາດຈະຖືກກັກ ພາຍຫຼັງເກີດອຸປະຕິເຫດຍ້ອນ ລົດທີ່ໄດ້ຮັບການປະກັນໄພເປັນຕົ້ນເຫດ.

**ຂ.** ການຮຽກຮ້ອງສິນທົດແທນຄືນ:

**18.13** ບໍລິສັດປະກັນໄພ ເຫັນດີເຂົ້າຮ່ວມໄກ່ເກ່ຍ ຫຼື ຟ້ອງຮ້ອງຕໍ່ບຸກຄົນທີ່ສາມໃຫ້ຮັບຜິດຊອບຕໍ່ການເກີດອຸປະຕິເຫດ ເພື່ອຮຽກຮ້ອງເອົາສິນທົດແທນທາງການເງິນ ໃຫ້ກັບຄວາມເສຍຫາຍທາງດ້ານຮ່າງກາຍ ແລະ/ຫຼື ຄວາມເສຍຫາຍທາງດ້ານວັດຖຸເກີດຂຶ້ນໃຫ້ແກ່ ຜູ້ໄດ້ຮັບການປະກັນໄພ.

**18.14** ໃນສອງກໍລະນີນີ້, ບໍລິສັດປະກັນໄພ ຮັບຜິດຊອບຈ່າຍຄ່າໃຊ້ຈ່າຍໃນການສືບສວນ, ຈ້າງຜູ້ຊ່ຽວຊານ ແລະ ທະນາຍຄວາມ ເພື່ອປະເມີນ ແລະ ຄ່າໃຊ້ຈ່າຍໃນການດຳເນີນຄະດີ, ແຕ່ບໍ່ໄດ້ຈ່າຍຄ່າປັບໃໝຕ່າງໆ ແລະ ຄ່າໃຊ້ຈ່າຍໃນການດຳເນີນຄະດີເພີ່ມເຕີມ.

18.15 ຈຳນວນເງິນຮຽກຮ້ອງທົດແທນຄວາມເສຍຫາຍ ແມ່ນໄດ້ກຳນົດຕາມການຕົກລົງລະຫວ່າງບໍລິສັດປະກັນໄພ ແລະ ຜູ້ໄດ້ຮັບການປະກັນໄພ. ໃນນັ້ນບໍລິສັດປະກັນໄພມີສິດທີ່ຈະບໍ່ດຳເນີນຄະດີກັບບຸກຄົນທີສາມ ຫຼື ຢຸດຕິການດຳເນີນຄະດີ ເມື່ອເຫັນວ່າການປົກປ້ອງສິດສຳລັບການຮຽກຮ້ອງ ຫຼື ການຟ້ອງຮ້ອງ ຈະບໍ່ປະສົບຜົນສຳເລັດ ແລະ ເມື່ອບໍລິສັດປະກັນໄພສັງເກດເຫັນວ່າ: ວິທີການແກ້ໄຂຂອງຜູ້ຖືກຟ້ອງຮ້ອງແມ່ນສົມເຫດສົມຜົນ.

18.16 ທຸກຂໍ້ຂັດແຍ່ງທີ່ກ່ຽວຂ້ອງກັບຂໍ້ 18.13 ຈະຖືກແກ້ໄຂໂດຍກຳມະການ, ກຳມະການອິດສະຫຼະຜູ້ໜຶ່ງຈະຖືກແຕ່ງຕັ້ງໂດຍການເຫັນດີຈາກພາກສ່ວນທີ່ກ່ຽວຂ້ອງ, ຖ້າບໍ່ດັ່ງນັ້ນ ຈະຖືກແຕ່ງຕັ້ງໂດຍປະທານປະຈຳສານທ້ອງຖິ່ນ ບ່ອນທີ່ຜູ້ໄດ້ຮັບການປະກັນໄພອາໃສຢູ່. ແຕ່ລະຝ່າຍຈະຮັບຜິດຊອບເຄິ່ງໜຶ່ງຂອງຄ່າໃຊ້ຈ່າຍສຳລັບກຳມະການ.

18.17 ເຖິງວ່າຈະມີການຕັດສິນຂອງກຳມະການ, ຖ້າຜູ້ໄດ້ຮັບການປະກັນໄພຫາກທຳການປົກປ້ອງສິດດ້ວຍຕົນເອງ ແລະ ມີຜົນໄດ້ຮັບທີ່ດີກວ່າຖ້າທຽບໃສ່ຄຳຕັດສິນຂອງກຳມະການ, ບໍລິສັດປະກັນໄພຈະຈ່າຍຄືນຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນ ເຊິ່ງຜູ້ໄດ້ຮັບການປະກັນໄພຕ້ອງຮັບຜິດຊອບ ແຕ່ບໍ່ສາມາດຮຽກຮ້ອງຄືນຈາກຝ່າຍອື່ນ ບົນພື້ນຖານເອກະສານຢັ້ງຢືນ ແລະ ພາຍໃນໄລຍະເວລາທີ່ກຳນົດໄວ້ໃນບັນດາເງື່ອນໄຂພິເສດ.

4) ຫຼັກການລວມທີ່ພົວພັນກັບ ການປະກັນໄພບໍລິສັດອື່ນຊ້ຳ:

18.18 ໃນກໍລະນີທີ່ມີສັນຍານຳບໍລິສັດອື່ນຊ້ຳ ທີ່ໃຫ້ການຄຸ້ມກັນໃຫ້ການສູນເສຍ, ຄວາມເສຍຫາຍ ຫຼື ຄວາມຮັບຜິດຊອບອັນດຽວກັນແມ່ນ ບໍລິສັດປະກັນໄພ ຈະຈ່າຍໃຫ້ ການສູນເສຍ, ຄວາມເສຍຫາຍ, ການທົດແທນ ຫຼື ຄ່າໃຊ້ຈ່າຍອື່ນ ຕາມອັດຕາສ່ວນ.

ມາດຕາ 19: ການຊຳລະເງິນສິນທົດແທນຊັກຊ້າ:

19.1 ບໍລິສັດປະກັນໄພຕ້ອງອອກຂໍ້ສະເໜີຈ່າຍສິນທົດແທນ ພາຍໃນ 6 (ຫົກ) ເດືອນ ນັບແຕ່ວັນທີເກີດອຸປະຕິເຫດ. ໃນກໍລະນີຜູ້ຖືກເຄາະຮ້າຍເສຍຊີວິດ ໄລຍະເວລາຈະຫຼຸດລົງເປັນ 30(ສາມສິບ) ວັນ.

ການລັກ:

19.2 ໃນກໍລະນີເກີດມີການລັກ, ຜູ້ໄດ້ຮັບການປະກັນໄພ ຈະມີສິດຮຽກຮ້ອງຈ່າຍສິນທົດແທນ ຫຼັງຈາກເວລາ 30 (ສາມສິບ) ວັນ ນັບແຕ່ມື້ແຈ້ງການເມື່ອມີເຫດການລັກເກີດຂຶ້ນ.

ເມື່ອລົດທີ່ໄດ້ຮັບການປະກັນໄພຫາກໄດ້ກັບຄືນມາຈາກການຖືກລັກ, ຂັ້ນຕອນການທົດແທນຄ່າເສຍຫາຍ ຕ້ອງປະຕິບັດຕາມລະບຽບຕໍ່ໄປນີ້:

ກ. ເມື່ອລົດທີ່ຖືກລັກຫາກໄດ້ຮັບກັບຄືນມາກ່ອນຈະໝົດກຳນົດເວລາ 30 (ສາມສິບ) ວັນ ທີ່ໄດ້ລະບຸໄວ້ຂ້າງເທິງ: ຜູ້ໄດ້ຮັບການປະກັນໄພຈະຖືກຜູກມັດໂດຍຂໍ້ຕົກລົງໃນສັນຍາປະກັນໄພແມ່ນຈະຕ້ອງຮັບເອົາລົດທີ່ຖືກລັກນັ້ນຄືນ ພ້ອມກັນນັ້ນ ບໍລິສັດປະກັນໄພ ຈະຈ່າຍພຽງແຕ່ຄ່າໃຊ້ຈ່າຍໃນການຟື້ນຟູຄືນສະພາບລົດທີ່ເກີດຈາກຄວາມເສຍຫາຍ ແລະ ຄ່າໃຊ້ຈ່າຍອື່ນໆຕາມທີ່ໄດ້ກຳນົດ.

ຂ. ເມື່ອລົດທີ່ຖືກລັກຫາກໄດ້ກັບຄືນມາກ່ອນທີ່ຈະຈ່າຍຄ່າທົດແທນ ແຕ່ພາຍຫຼັງໝົດກຳນົດ 30 (ສາມສິບ) ວັນ ນັບແຕ່ມື້ແຈ້ງວ່າ ມີເຫດການລັກເກີດຂຶ້ນ: ຖ້າຜູ້ໄດ້ຮັບການປະກັນໄພ ຫາກມີການຮຽກຮ້ອງຄ່າເສຍຫາຍ ແຕ່ບໍ່ທັນໄດ້ຮັບການຊຳລະຈາກບໍລິສັດປະກັນໄພ, ຜູ້ໄດ້ຮັບການປະກັນໄພອາດຈະຮັບເອົາລົດຄືນຕາມຂໍ້ກຳນົດ 19.2 (ກ) ຂ້າງເທິງ ຫຼື ປ່ອຍລົດດັ່ງກ່າວນັ້ນໃຫ້ບໍລິສັດປະກັນໄພ, ເວລານີ້ບໍລິສັດປະກັນໄພຕ້ອງຊຳລະໃຫ້ຜູ້ໄດ້ຮັບການປະກັນໄພ ຈຳນວນເງິນທັງໝົດທີ່ໄດ້ຮັບຄໍ້າປະກັນໄພຕາມເງື່ອນໄຂປະກັນໄພ "ຊ" - ການລັກ.

ຄ. ເມື່ອລົດທີ່ຖືກລັກຫາກໄດ້ຮັບຄືນມາ ພາຍຫຼັງທີ່ໄດ້ຊຳລະເງິນທົດແທນແລ້ວ, ພາຍໃນ 30 (ສາມສິບ) ວັນ ນັບແຕ່ມື້ຮັບຮູ້ຂ່າວເຖິງ ການຟື້ນຟູນັ້ນ, ຜູ້ໄດ້ຮັບການປະກັນໄພ ອາດຈະຕັດສິນໃຈທີ່ຈະເອົາລົດດັ່ງກ່າວຄືນໂດຍການສົ່ງຈຳນວນເງິນສິນທົດແທນຄືນ ໂດຍຕ້ອງລົບກັບຈຳນວນເງິນຄ່າໃຊ້ຈ່າຍໃນການສ້ອມແປງຄວາມເສຍຫາຍ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກຳນົດໄວ້.

ມາດຕາ **20:** ການແທນສິດທິ ແລະ ການຟ້ອງຮ້ອງພາຍຫຼັງເກີດອຸປະຕິເຫດ

**20.1** ບໍລິສັດປະກັນໄພ ມີສິດແທນ ຜູ້ໄດ້ຮັບການປະກັນໄພ ໃນຂອບເຂດຈຳນວນເງິນຄ່າສິນທົດແທນສູງສຸດ ທີ່ບໍລິສັດປະກັນໄພ ໄດ້ຈ່າຍໃຫ້ກັບ ບຸກຄົນທີ່ຕ້ອງຮັບຜິດຊອບ ຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ.

ເຖິງຢ່າງໃດກໍ່ຕາມ, ບໍລິສັດປະກັນໄພ ບໍ່ມີສິດທຳການຟ້ອງຮ້ອງໃດໆ ຕໍ່ບຸກຄົນທີ່ເປັນຍາດຕິພີ່ນ້ອງເຊັ່ນ: ພໍ່ເຖົ້າ, ແມ່ເຖົ້າ, ພໍ່ແມ່ ແລະ ລູກຫຼານ, ຄົນສະນິດ, ພະນັກງານ ຫຼື ບຸກຄົນໃດກໍ່ຕາມ ທີ່ໃຊ້ຊີວິດຢູ່ຮ່ວມກັບ ຜູ້ໄດ້ຮັບການປະກັນໄພ, ຍົກເວັ້ນໃນກໍລະນີໜຶ່ງໃນບຸກຄົນເຫຼົ່ານີ້ ມີເຈດຕະນາບໍ່ດີ.

**20.2** ຖ້າບໍລິສັດປະກັນໄພບໍ່ສາມາດທຳການແທນສິດທິຕໍ່ໄປໄດ້ອີກ ເນື່ອງຈາກການກະທຳ ຫຼື ການຂາດຕົກບົກຜ່ອງຂອງ ຜູ້ຖືສັນຍາປະກັນໄພ ແລະ/ຫຼື ຜູ້ໄດ້ຮັບການປະກັນໄພ ແລະ/ຫຼື ຜູ້ຕາງໜ້າ

ຂອງພວກເຂົາ, ຜົນປະໂຫຍດຈາກການຄຸ້ມກັນອາດຈະສິ້ນສຸດລົງ ເຖິງແມ່ນວ່າການແທນສິດຍັງ ສາມາດປະຕິບັດໄດ້ກໍ່ຕາມ.

## ພາກທີ IV: ລະບຽບການທີ່ກ່ຽວຂ້ອງເຖິງຂໍ້ຕົກລົງໃນສັນຍາປະກັນໄພ

**ມາດຕາ 21: ການຮ່າງສັນຍາ ແລະ ການບັງຄັບໃຊ້ຂໍ້ຕົກລົງໃນສັນຍາ:**

**21.1** ໃບສະເໜີຂໍປະກັນໄພບໍ່ແມ່ນຂໍ້ຕົກລົງສັນຍາລະຫວ່າງຝ່າຍຕ່າງໆ, ໃບຢັ້ງຢືນການປະກັນໄພ ແລະ/ຫຼື ໃບແຈ້ງການປະກັນໄພ ເປັນຫຼັກຖານຂອງຂໍ້ຕົກລົງສັນຍາ.

**21.2** ຂໍ້ຕົກລົງສັນຍາປະກັນໄພຈະສຳເລັດພາຍຫຼັງທີ່ສອງຝ່າຍໄດ້ລົງນາມເຊັນຢ່າງຖືກຕ້ອງ. ສັນຍາຈະເລີ່ມຕົ້ນແຕ່ວັນ ແລະ ເວລາເລີ່ມຕົ້ນ ແລະ ຍັງມີຜົນບັງຄັບໃຊ້ ຈົນຮອດວັນໝົດກຳນົດ ຕາມທີ່ໄດ້ກຳນົດໄວ້ໃນໃບຢັ້ງຢືນການປະກັນໄພ.

**21.3** ບັນດາຂໍ້ກຳນົດເຫຼົ່ານີ້ ຍັງນຳໃຊ້ກັບເງື່ອນໄຂການແກ້ໄຂ ຫຼື ການເພີ່ມເຕີມອື່ນເຂົ້າໃນສັນຍາ.

**ມາດຕາ 22: ອາຍຸຂອງສັນຍາປະກັນໄພ:**

**22.1** ສັນຍາປະກັນໄພຈະໝົດຜົນບັງຄັບໃຊ້ ຕາມໄລຍະເວລາທີ່ລະບຸໄວ້ໃນໃບຢັ້ງຢືນປະກັນໄພ.

**22.2** ບໍລິສັດປະກັນໄພບໍ່ຖືກຜູກມັດທີ່ຈະຍອມຮັບໃນການຕໍ່ສັນຍາປະກັນໄພ ແລະ ບໍ່ມີພັນທະໜ້າທີ່ຕ້ອງສົ່ງແຈ້ງການ ການຕໍ່ສັນຍາປະກັນໄພນີ້ ຫຼື ທຸກໆການຕໍ່ສັນຍາໃດທັງນັ້ນ, ແລະ ບໍລິສັດປະກັນໄພ ຈະບໍ່ຮັບຜິດຊອບ ຕໍ່ການສູນເສຍທີ່ເກີດຂຶ້ນຫຼັງຈາກ ໃບຢັ້ງຢືນປະກັນໄພນີ້ ໝົດອາຍຸການນຳໃຊ້.

**ມາດຕາ 23: ການຍົກເລີກສັນຍາປະກັນໄພ:**

ສັນຍານີ້ອາດຈະຖືກຍົກເລີກ ກ່ອນໄລຍະເວລາປະກັນໄພ ໃນກໍລະນີຕໍ່ໄປນີ້:

**23.1** ການຍົກເລີກສັນຍາໂດຍ ຜູ້ຖືສັນຍາປະກັນໄພ ຫຼື ບໍລິສັດປະກັນໄພ.

ກ. ໃນກໍລະນີໂອນຍ້າຍກຳມະສິດຄອບຄອງລົດທີ່ໄດ້ຮັບການປະກັນໄພ.

ຂ. ກໍລະນີທີ່ເກີດໜຶ່ງໃນເຫດການຕໍ່ໄປນີ້: ການປ່ຽນແປງທີ່ຢູ່ອາໄສ, ການປ່ຽນແປງໃນສະຖານະການສົມລົດ, ການປ່ຽນແປງໃນຮູບແບບຂໍ້ຕົກລົງກ່ອນສົມລົດ, ການປ່ຽນອາຊີບ, ການເຂົ້າບຳນານ ຫຼື ການຢຸດກິດຈະກຳທີ່ເປັນມືອາຊີບທັງໝົດ ຂອງຜູ້ຖືສັນຍາປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ.

**23.2** ການຍົກເລີກສັນຍາໂດຍ ຜູ້ສືບທອດ ຫຼື ບໍລິສັດປະກັນໄພ.

ໃນກໍລະນີການໂອນກຳມະສິດນຳໃຊ້ລົດທີ່ໄດ້ຮັບການປະກັນໄພຍ້ອນ ຜູ້ຖືສັນຍາປະກັນໄພ ຫຼື ເຈົ້າຂອງລົດໄດ້ຮັບການປະກັນໄພເສຍຊີວິດ.

**23.3** ການຍົກເລີກສັນຍາໂດຍ ບໍລິສັດປະກັນໄພ.

ກ. ກໍລະນີບໍ່ຊຳລະຄ່າທຳນຽມປະກັນໄພ.

ຂ. ກໍລະນີມີຄວາມສ່ຽງເພີ່ມ.

ຄ. ກໍລະນີແຈ້ງຄວາມສ່ຽງທີ່ໄດ້ຮັບການຄຸ້ມກັນບໍ່ຄົບ ຫຼື ບໍ່ຖືກຕ້ອງ ໃນເວລາເຊັນສັນຍາປະກັນໄພ ຫຼື ໄລຍະເວລາຈັດຕັ້ງປະຕິບັດສັນຍານີ້.

ງ. ໃນກໍລະນີຜູ້ຖືສັນຍາປະກັນໄພຍົກເລີກສັນຍາປະກັນນຳບໍລິສັດອື່ນ ລະຫວ່າງຜູ້ຖືສັນຍາປະກັນໄພ ແລະ ບໍລິສັດປະກັນໄພ ຫຼັງຈາກເກີດອຸປະຕິເຫດ.

ຈ. ກໍລະນີຜູ້ຖືສັນຍາປະກັນໄພຖືກຍົກເລີກ ຫຼື ໝົດຄວາມສາມາດໃນການຊຳລະໜີ້ ຕາມຂໍ້ກຳນົດຂອງກົດໝາຍ.

**23.4** ຍົກເລີກສັນຍາໂດຍ ຜູ້ຖືສັນຍາປະກັນໄພ.

ກ. ກໍລະນີເປັນການສູນເສຍສະຖານະການທີ່ຮ້າຍແຮງໃດໜຶ່ງ ເຊິ່ງນອນໃນສັນຍາປະກັນໄພ, ບໍລິສັດປະກັນໄພຈະຢຸດຕິການໃຫ້ສ່ວນຫຼຸດຄ່າທຳນຽມປະກັນໄພ ໃນກໍລະນີນັ້ນ.

ຂ. ກໍລະນີບໍລິສັດປະກັນໄພຢຸດດຳເນີນທຸລະກິດ ຫຼື ລົ້ມລະລາຍ.

ຄ. ກໍລະນີບໍລິສັດປະກັນໄພຍົກເລີກສັນຍາອື່ນລະຫວ່າງ ຜູ້ຖືສັນຍາປະກັນໄພ ແລະ ບໍລິສັດປະກັນໄພ ຫຼັງຈາກເກີດອຸປະຕິເຫດຄັ້ງໜຶ່ງ.

ງ. ໃນກໍລະນີມີການປັບປຸງຄ່າທຳນຽມປະກັນໄພຕາມມາດຕາ 16 ຂອງສັນຍາສະບັບນີ້.

**23.5** ການຍົກເລີກໂດຍ ຝ່າຍທີ່ໃຫ້ກູ້ຢືມຂອງຜູ້ຖືສັນຍາປະກັນໄພ.

ໃນກໍລະນີທີ່ຜູ້ຖືສັນຍາປະກັນໄພຖືກຍົກເລີກ ຫຼື ໝົດຄວາມສາມາດໃນການຊຳລະໜີ້ຕາມຂໍ້ກຳນົດກົດໝາຍ.

**23.6** ການຍົກເລີກຕາມສິດທິ.

ກ. ກໍລະນີລົດທີ່ໄດ້ຮັບການປະກັນໄພໄດ້ຮັບຄວາມເສຍຫາຍທັງໝົດ ຍ້ອນຜົນໄດ້ຮັບຈາກຄວາມສ່ຽງທີ່ບໍ່ມີປະກັນໄພ.

ຂ. ໃນກໍລະນີການໂອນກຳມະສິດລົດທີ່ໄດ້ຮັບການປະກັນໄພ.

ຄ. ກໍລະນີບໍລິສັດປະກັນໄພຖອນສັນຍາປະກັນໄພ.

ງ. ກໍລະນີເຈົ້າໜ້າທີ່ຮຽກເອົາລົດໄປຮັບໃຊ້ຕາມເງື່ອນໄຂ ທີ່ບົ່ງໄວ້ຕາມກົດໝາຍ.

**23.7** ໃນກໍລະນີຍົກເລີກສັນຍາໃນໄລຍະເວລາປະກັນໄພ, ຜູ້ຖືສັນຍາປະກັນໄພ ບໍ່ມີພັນທະຈຳເປັນຕ້ອງຈ່າຍສ່ວນຄ່າທຳນຽມສຳລັບເວລາຫຼັງມື້ຍົກເລີກ, ຖ້າຄ່າທຳນຽມນີ້ໄດ້ຮັບການຊຳລະໄປແລ້ວ ຜູ້ຖືສັນຍາປະກັນໄພ ຈະໄດ້ຮັບການຊຳລະຄືນຕາມອັດຕາສ່ວນ.

**23.8** ຜູ້ຖືສັນຍາປະກັນໄພ ຫຼື ຜູ້ສືບທອດ ມີສິດຍົກເລີກສັນຍາສະບັບນີ້ ຖ້າເຫັນວ່າເໝາະສົມ ດ້ວຍໜັງສືຮັບຮອງ ຫຼື ດ້ວຍວິທີການແຈ້ງໂດຍບໍ່ຍອມຮັບ ຢູ່ສຳນັກງານໃຫຍ່ຂອງບໍລິສັດປະກັນໄພ ຫຼື ສຳນັກງານຕົວແທນເຊັນສັນຍາສະບັບນີ້ ຫຼື ດ້ວຍການກະທຳທີ່ບໍ່ຖືກຕ້ອງຕາມກົດໝາຍ.

ຖ້າບໍລິສັດປະກັນໄພຍົກເລີກສັນຍາສະບັບນີ້, ບໍລິສັດປະກັນໄພຕ້ອງແຈ້ງໃຫ້ຜູ້ຖືສັນຍາປະກັນໄພດ້ວຍຈົດໝາຍຄ້ຳປະກັນ.

**23.9** ໃນກໍລະນີຍົກເລີກສັນຍາໄດ້ກຳນົດໃນ:

ມາດຕາ 23.3 (ກ) - ການຍົກເລີກໃນກໍລະນີທີ່ບໍ່ໄດ້ຈ່າຍຄ່າທຳນຽມປະກັນໄພ;

ມາດຕາ 23.4 (ງ) - ການຍົກເລີກໂດຍຜູ້ຖືສັນຍາປະກັນໄພ ເມື່ອບໍລິສັດປະກັນໄພປ່ຽນແປງຄ່າທຳນຽມ;

ໄລຍະເວລາກຳນົດໃຫ້ແກ່ບັນດາແຈ້ງການເຫຼົ່ານີ້ ຈະເລີ່ມແຕ່ວັນທີສົ່ງແຈ້ງການ.

23.10. ໃນທຸກໆການຍົກເລີກອື່ນທີ່ລະບຸໄວ້ຂ້າງເທິງ, ການຍົກເລີກຈະມີຜົນບັງຄັບໃຊ້ພາຍໃນ 30 (ສາມສິບ) ວັນ ຫຼັງຈາກມື້ທີ່ໄດ້ຮັບການແຈ້ງຈາກ ຝ່າຍທີ່ຮ້ອງຂໍຍົກເລີກ ຫຼື ໄວກວ່ານັ້ນ ຖ້າໄດ້ຮັບເອກະສານການຍິນຍອມເປັນລາຍລັກອັກສອນ.

**ມາດຕາ 24: ການໂອນກຳມະສິດນຳໃຊ້ລົດ:**

**1) ຜູ້ຖືສັນຍາປະກັນໄພເສຍຊີວິດ:**

**24.1** ໃນກໍລະນີຜູ້ຖືສັນຍາປະກັນໄພເສຍຊີວິດ, ປະກັນໄພນີ້ຈະຖືກໂອນກຳມະສິດໃຫ້ຜູ້ສືບທອດລົດ. ໃນກໍລະນີຜູ້ສືບທອດຍົກເລີກສັນຍາ, ຜູ້ສືບທອດຕ້ອງຈ່າຍເງິນ ໃຫ້ບໍລິສັດປະກັນໄພເປັນຈຳນວນເງິນ ເທົ່າກັບຄ່າທຳນຽມປະກັນໄພໃຫ້ສອດຄ່ອງກັບໄລຍະເວລາກ່ອນການຍົກເລີກ.

2) **ການໂອນກຳມະສິດລົດ:**

**24.2** ໃນກໍລະນີໂອນກຳມະສິດລົດ, ສັນຍາສະບັບນີ້ຈະຖືກຍົກເລີກໂດຍອັດຕະໂນມັດ.

**24.3** ຜູ້ຖືສັນຍາປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ຕ້ອງແຈ້ງໃຫ້ບໍລິສັດປະກັນໄພຮັບຊາບ ກ່ຽວກັບວັນທີໂອນກຳມະສິດດ້ວຍຈົດໝາຍຄໍ້າປະກັນ ຫຼື ແຈ້ງການໂດຍກົງເປັນລາຍລັກອັກສອນ ໃຫ້ບໍລິສັດປະກັນໄພ.

**ມາດຕາ 25: ລະບຽບ:**

**25.1** ການຮ້ອງທຸກທັງໝົດທີ່ເກີດຂຶ້ນຕາມສັນຍາສະບັບນີ້ ຕ້ອງຈັດຕັ້ງປະຕິບັດພາຍໃນ 3 (ສາມ) ປີ ນັບແຕ່ມື້ທີ່ເກີດເຫດການເຮັດໃຫ້ມີການຮ້ອງຟ້ອງດັ່ງກ່າວນັ້ນ.

**ມາດຕາ 26: ສິດໃນການຕັດສິນ:**

**26.1** ຂໍ້ຂັດແຍ່ງໃດໆທີ່ເກີດຂຶ້ນລະຫວ່າງ ຜູ້ໄດ້ຮັບການປະກັນໄພ ແລະ ບໍລິສັດປະກັນໄພ ຈະຖືກນຳໄປຂຶ້ນສານທ້ອງຖິ່ນ ບ່ອນທີ່ຜູ້ໄດ້ຮັບການປະກັນໄພອາໃສຢູ່ເພື່ອແກ້ໄຂ.

ສຳລັບການປະກັນໄພຄວາມເສຍຫາຍດ້ານຊັບສິນ, ສານທີ່ມີສິດໃນການຕັດສິນ ຕ້ອງແມ່ນສານບ່ອນທີ່ເກັບຮັກສາຊັບສິນນັ້ນ.

ສຳລັບການປະກັນໄພອຸປະຕິເຫດ, ສານມີສິດໃນການຕັດສິນ ແມ່ນສານບ່ອນເກີດອຸປະຕິເຫດ.

## ພາກທີ V: ບັນດາເອກະສານຊ້ອນທ້າຍ

## ເອກະສານຊ້ອນທ້າຍ 01: ນິຍາມກ່ຽວກັບຄວາມຮັບຜິດຊອບໃນກໍລະນີບໍ່ຖືຄວາມຜິດ

ເອກະສານຊ້ອນທ້າຍນີ້ ຄໍ້າປະກັນໃຫ້ແກ່ຄວາມຮັບຜິດຊອບທາງແພ່ງ ຂອງອົງການຈັດຕັ້ງ ຫຼື ບຸກຄົນນຳໃຊ້ພາຫະນະທາງບົກລວມທັງ ລົດພ່ວງ ແລະ ລົດພ່ວງເຄິ່ງ.

ນິຍາມຄວາມຮັບຜິດຊອບໃນກໍລະນີທີ່ບໍ່ຖືຄວາມຜິດ ຈະຖືກນຳໃຊ້ເມື່ອຜູ້ໄດ້ຮັບການປະກັນໄພບໍ່ມີຄວາມຮັບຜິດຊອບ ຕໍ່ເຫດການດັ່ງກ່າວນັ້ນ ແລະ ໃບຢັ້ງຢືນປະກັນໄພພຽງແຕ່ຄໍ້າປະກັນໃຫ້ ຄວາມເສຍຫາຍດ້ານຮ່າງກາຍ ຂອງບຸກຄົນທີສາມເທົ່ານັ້ນ. ບໍລິສັດປະກັນໄພ ຮັບປະກັນວ່າຈະຊຳລະເງິນໃຫ້ຜູ້ຖືກເຄາະຮ້າຍ ຕາມຄວາມເສຍຫາຍຕົວຈິງ ແຕ່ບໍ່ເກີນຈຳນວນເງິນທີ່ກຳນົດໄວ້ໃນຕາຕະລາງລຸ່ມນີ້.

| ລາຍລະອຽດຂອບເຂດຂອງການຄຸ້ມກັນ | ຈຳນວນເງິນ (ກີບ) |
|---|---|
| **ຄວາມເສຍຫາຍດ້ານຮ່າງກາຍ**, ສູງສຸດຕໍ່ອຸປະຕິເຫດ | 10.000.000 |

| | |
|---|---|
| ➢ ເສຍຊີວິດ ຫຼື ພິການຖາວອນທັງໝົດ, ສູງສຸດຕໍ່ຄົນ | 3.000.000 |
| ➢ ຄ່າປິ່ນປົວ, ສູງສຸດຕໍ່ຄົນ<br>(ລວມທັງຄ່າທົດແທນຕາມສັນຍາໃຫ້ກໍລະນີນອນຢູ່ໂຮງໝໍເກີນ 24 ຊົ່ວໂມງ) | 1.800.000<br>100.000 |

ໃນກໍລະນີເກີດມີຄວາມຕ້ອງການ, ຜູ້ໄດ້ຮັບການປະກັນໄພ ອາດສະເໜີໃຫ້ເພີ່ມຈຳນວນເງິນຄ່າທົດແທນໃຫ້ຜູ້ຖືກເຄາະຮ້າຍ ສູງກວ່າຂອບກຳນົດນີ້ ແລະ ຕ້ອງຈ່າຍຄ່າສ່ວນຕ່າງນັ້ນດ້ວຍຕົນເອງ.

## ເອກະສານຊ້ອນທ້າຍ 02: ຕາຕະລາງອັດຕາສິນທົດແທນພິການ

**I. ພິການຖາວອນທັງໝົດ (100%)**

- ➢ ຕາເສຍ ຫຼື ຕາບອດທັງສອງເບື້ອງ;
- ➢ ສູນເສຍມືທັງສອງເບື້ອງ ຫຼື ຂາທັງສອງເບື້ອງ;
- ➢ ການເສຍສະຕິ ທີ່ບໍ່ສາມາດປິ່ນປົວຄືນໄດ້ ຍ້ອນຜົນກະທົບໂດຍກົງ ແລະ ສະເພາະຈາກອຸບັດຕິເຫດທີ່ໄດ້ຮັບການຄຸ້ມກັນ.

**II. ພິການຖາວອນບາງສ່ວນ**

*ຫົວໜ່ວຍຄິດໄລ່: % (ເປີເຊັນ)*

| ຊື່ພາກສ່ວນພິການ | ເບື້ອງຂວາ | | ເບື້ອງຊ້າຍ |
|---|---|---|---|
| ເສຍໝົດແຂນເບື້ອງໜຶ່ງ ຫຼື ຝາມື | 60 | | 50 |
| ບໍ່ສາມາດເຄື່ອນເໜັງບ່າໄຫລ່ 1 ເບື້ອງໄດ້ | 25 | | 20 |
| ບໍ່ສາມາດເຄື່ອນເໜັງແຂນສອກໄດ້ | 20 | | 15 |
| ບໍ່ສາມາດເຄື່ອນເໜັງຂໍ້ກະດູກໄດ້ | 20 | | 15 |
| ເສຍນິ້ວໂປ້ ຫຼື ນິ້ວຊີ້ | 30 | | 15 |
| ເສຍນິ້ວມືສາມນິ້ວ, ນັບທັງນິ້ວໂປ້ ຫຼື ນິ້ວຊີ້ | 25 | | 20 |
| ເສຍນິ້ວມືສາມນິ້ວ, ບໍ່ນັບນິ້ວໂປ້ ຫຼື ນິ້ວຊີ້ | 25 | | 20 |
| ເສຍນິ້ວໂປ້ ແລະ ອີກໜຶ່ງນິ້ວທີ່ບໍ່ແມ່ນນິ້ວຊີ້ | 25 | | 20 |
| ເສຍນິ້ວຊີ້ ແລະ ອີກໜຶ່ງນິ້ວທີ່ບໍ່ແມ່ນນິ້ວໂປ້ | 20 | | 17 |

| | | | |
|---|---|---|---|
| ເສຍນິ້ວໂປ້ 1 ນິ້ວ | 20 | | 15 |
| ເສຍນິ້ວຊີ້ 1 ນິ້ວ | 15 | | 10 |
| ເສຍນິ້ວກາງ, ນິ້ວນາງ ຫຼື ນິ້ວກ້ອຍ | 10 | | 8 |
| ເສຍນິ້ວນາງ ແລະ ນິ້ວກ້ອຍ | 15 | | 12 |
| ຂາເບື້ອງໜຶ່ງ ຫຼື ຝາຕີນເບື້ອງໜຶ່ງ | 50 | | 50 |
| ຕັດຂາດຝາຕີນເບື້ອງໜຶ່ງນັບທັງບັນດານິ້ວຕີນ | | 30 | |
| ຕັດຖິ້ມຄາງກະໄຕເບື້ອງລຸ່ມ | | 30 | |
| ເສຍຕາເບື້ອງໜຶ່ງ ຫຼື ຫຼຸດສາຍຕາລົງເຄິ່ງໜຶ່ງ | | 25 | |
| ຫູໜວກທັງສອງເບື້ອງ | | 40 | |
| ຫູໜວກເບື້ອງໜຶ່ງ | | 10 | |
| ຂາຫັກເບື້ອງໜຶ່ງ ຫຼື ຝາຕີນເບື້ອງໜຶ່ງ | | 25 | |
| ຫັກກະດູກສະບ້າຫົວເຂົ່າ | | 20 | |
| ສະໂພກ ຫຼື ຫົວເຂົ່າບໍ່ສາມາດເຄື່ອງເໜັງໄດ້ເລີຍ | | 20 | |
| ອະໄວຍະວະເບື້ອງລຸ່ມສັ້ນເຂົ້າຢ່າງໜ້ອຍ 5 ຊມ | | 15 | |
| ເສຍນິ້ວໂປ້ຕີນໜຶ່ງນິ້ວ | | 10 | |
| ເສຍນິ້ວຕີນນິ້ວອື່ນໜຶ່ງນິ້ວ (ນອກຈາກນິ້ວໂປ້) | | 5 | |

- ສໍາລັບຄົນທີ່ຖະນັດມືຊ້າຍ ອັດຕາການພິການຈະກົງກັນຂ້າມກັບອັດຕາຄົນທີ່ຖະນັດເບື້ອງຂວາ.
- ໃນກໍລະນີການບາດເຈັບທີ່ບໍ່ໄດ້ລະບຸຢູ່ໃນຕາຕະລາງຂ້າງເທິງ, ເຖິງແມ່ນວ່າຈະມີຄວາມຮຸນ ແຮງໜ້ອຍ, ຈະໄດ້ຮັບການທົດແທນຕາມອັດຕາສ່ວນ ໂດຍອີງໃສ່ການປຽບທຽບຄວາມຮຸນແຮງຂອງມັນ ກັບກໍລະນີອື່ນທີ່ມີໃນຕາຕະລາງ ແລະ ບໍ່ຈໍາແນກເຖິງອາຊີບຂອງຄົນທີ່ເກີດອຸປະຕິເຫດ.
- ການສູນເສຍໜ້າທີ່ຂອງແຕ່ລະພາກສ່ວນ ແມ່ນຖືວ່າພິການພາກສ່ວນນັ້ນ.
- ໃນກໍລະນີມີບ່ອນພິການຫຼາຍບ່ອນເຊິ່ງເກີດຈາກອຸປະຕິເຫດຄັ້ງດຽວ, ຄ່າທົດແທນແມ່ນ ຈ່າຍໃຫ້ກັບແຕ່ລະສ່ວນພິການ ແຕ່ບໍ່ເກີນຈໍານວນທັງໝົດ ທີ່ຈ່າຍໃນກໍລະນີຂອງຄວາມພິການຖາວອນທັງໝົດ.

**<u>ແຈ້ງການສຳລັບຜູ້ທີ່ຖືສັນຍາປະກັນໄພສະບັບນີ້</u>**

ກະລຸນາກວດເບິ່ງເພື່ອໃຫ້ແນ່ໃຈວ່າ ສັນຍາປະກັນໄພສະບັບນີ້ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງທ່ານ ເພື່ອຫຼີກລ້ຽງການເຂົ້າໃຈຜິດ, ສັນຍາປະກັນໄພ, ໃບຢັ້ງຢືນປະກັນໄພ ແລະ ບໍ່ວ່າເງື່ອນໄຂທີ່ໄດ້ຮັບການປັບປຸງປ່ຽນແປງໃດໆ ທີ່ຄັດຕິດກັບສັນຍາປະກັນໄພສະບັບນີ້ຕ້ອງໄດ້ອ່ານຢ່າງລະມັດລະວັງ.